**ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ**

**Copyright © 2014 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 10, 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# <u>ນິມິດໝາຍຂອງພຣະເຢຊູຄຣິດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພຣະນິມິດ ບົດທີ 1

**<u>ພູມຫລັງຂອງພຣະຄັມພີ</u>**: ພຣະນິມິດ ບົດທີ 1

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ແມ່ນຫຍັງຈະໄປຈະມາກໍຕາມ ພຣະເຢຊູຊົງຄວບຄຸມໂລກທັງໝົດ

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ທ່ານຍັງຈະຢ້ານກົວສິ່ງໃດໃນອະນາຄົດ?

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະບອກໃຫ້ພວກເຮົາຮູ້ຄວາມໝາຍຂອງໂຢຮັນທີ່ເພິ່ນໄດ້ມີນິມິດໝາຍ ແລະເພິ່ນກໍຍັງຢັ້ງຢືນວ່າພຣະເຢຊູຊົງຄວບຄຸມທຸກສິ່ງທຸກຢ່າງໃນໂລກນີ້ ແລະໃນອະນາຄົດຂ້າງໜ້າ.

## <u>ແຜນການສິດສອນສຳລັບຄຣູ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ)</u>

1. ນຳພານັກຮຽນ ແລະແນະນຳນັກຮຽນໃຫ້ສົນທະນານຳກັນໃນຄຳຖາມຕໍ່ໄປນີ້:
    - ມີຜູ້ໃດເຄີຍໄດ້ຮຽນປຶ້ມພຣະນິມິດຜ່ານມາບໍ່?
    - ພວກເຮົາເຄີຍໄດ້ຍິນໂບດ ຫລືອາຈານຂອງພວກເຮົາ ເທດຫລືສອນກ່ຽວກັບພຣະຄັມພີພຣະນິມິດນີ້ຫລືບໍ່?
    - ທ່ານຄິດວ່າຫົວຂໍ້ຂອງປຶ້ມນີ້ໜ້າສົນໃຈສຳລັບຄຣິສຕຽນຂອງເຮົາບໍ່? ເປັນຫຍັງຈຶ່ງໜ້າສົນໃຈ ແລະເປັນຫຍັງຈຶ່ງບໍ່ໜ້າສົນໃຈ?
    - ທ່ານຄິດວ່າ ຄົນທັງຫລາຍຄິດຢ່າງໃດສຳລັບປຶ້ມນີ້?

ຄຣູຈະອະທິບາຍວ່າ ການສຶກສາປຶ້ມນີ້ ແມ່ນການເຕືອນພວກເຮົາວ່າແມ່ນຫຍັງຈະເກີດຂຶ້ນໃນພາຍຂ້າງໜ້າ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ອ່ານພຣະນິມິດ 1:1-3. ຖາມ: ຂໍ້ໃດຫລືວ່າປໂຍກໃດເປັນຈຸດປະສົງຂອງປຶ້ມນີ້? (1:1)

3. ອະທິບາຍໃຫ້ນັກຮຽນຟັງວ່າ ປຶ້ມນີ້ຂຽນຂຶ້ນມາເພື່ອຄົນສັດຕະວັດທຳອິດທີ່ມີຄວາມເຊື່ອ, ແລະຢູ່ໃນອຳນາດຂອງກຸງໂຣມ, ອາສັຍຢູ່ແຖບມະຫາສມຸດເມດິເຕເຣນຽນ. ຖາມນັກຮຽນວ່າພວກເຂົາຮູ້ບໍ່ວ່າລູກສິດພຣະເຢຊູກຸ່ມທຳອິດມີໃຜແດ່? ແລະໃນປີໃດ? ພວກເຮົາຮູ້ວ່າມີຫລາຍ ເຫດສະນັ້ນພວກເຂົາຈຶ່ງຖືກຂົ່ມເຫັງ. ພວກເຂົາມາຈາກຫລາຍຊົນເຜົ່າ ມາຈາກຫລາຍການເຊື່ອຖື, ມາຈາກຫລາຍສັງຄົມຄວາມເປັນຢູ່. ບາງຄົນກໍອ່ານໜັງສືໄດ້ບາງຄົນກໍບໍ່ໄດ້ ອີກອັນນຶ່ງອຳນາດປົກຄອງກຸງໂຣມກໍຍິ່ງບີບບັງຄັບ.

4. ອ່ານ ພຣະນິມິດ 1:4-8 ຈົດໝາຍນີ້ແມ່ນຈົດໝາຍຂອງໂຢຮັນ. ໂຢຮັນເປັນຄົນລັກສະນະແບບໃດ?

5. ຖາມ: ເຈັດໂບດໃນເອເຊັຽ ມີໂບດໃດແດ່ ທີ່ຢູ່ໃນ 1:4 ທີ່ໂຢຮັນເວົ້າເຖິງ. ແລະໂບດທີ່ໄດ້ກ່າວໄວ້ແລ້ວໃນຂໍ້ 11.

6. ແມ່ນໃຜທີ່ເປັນຕົວເອກທີ່ກ່າວຫລາຍກວ່າໝູ່ໃນພຣະນິມິດບົດທີ 1? (ພຣະເຢຊູຄຣິດ) ແນະນຳນັກຮຽນໃຫ້ຫາຂໍ້ພຣະຄຳທີ່ກ່ຽວກັບພຣະເຢຊູ 5 ເທື່ອຂຶ້ນໄປ……ວ່າພຣະອົງຊົງເປັນຈອມກະສັດ.

7. ອ່ານ ພຣະນິມິດ 1:9-20 ໜູນໃຈນັກຮຽນວ່າພວກເຮົາຍັງບໍ່ທັນເຖິງ. ໂຢຮັນເປັນຜູ້ທີ່ເຕືອນໃຈພວກເຮົາທັງຫລາຍ ວ່າສິ່ງທັງຫລາຍເຫລົ່ານີ້ຈະມີມາໃນພາຍພາກໜ້າ.

8. ຮູບພາບຕ່າງໆທີ່ພວກເຮົາເຫັນ ຂໍ້12-20 ມີຄວາມໝາຍຫຍັງແດ່ບໍ່? ເປັນໄປໄດ້ບໍ່ຖ້າພວກເຮົາຫາກຕີຄວາມໝາຍໄປຢ່າງອື່ນ?

## <u>ນຳບົດຮຽນໄປໃຊ້ໃນປະຈຳວັນ</u>

9. ຖາມ: ການດຳເນີນຊີວິດແບບຄຣິສຕຽນງ່າຍກວ່າການດຳເນີນຊີວິດທີ່ບໍ່ເປັນຄຣິສຕຽນບໍ ຫລືຢ່າງໃດ? ຖ້າຄຣິສຕຽນຫາກຍາກກວ່າ ຍາກຢ່າງໃດ? ອະທິບາຍ. ໃນຍຸກໃດ? ແລະເຂດໃດ?

10. ທ່ານຈະສລຸບປຶ້ມພຣະນິມິດບົດທີ 1 ນີ້ວ່າຢ່າງໃດ? ຈະເນັ້ນໜັກວ່າເປັນບົດທີ່ຈະແຈ້ງວ່າພຣະເຢຊູເປັນຜູ້ທີ່ມີຊີວິດຕລອດໄປເປັນນິດ, ມີພລັງອຳນາດສູງສຸດ ແລະຄວບຄຸມທົ່ວໂລກຈັກກວານນີ້ບໍ?

11. ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# <u>ຈົດໝາຍຂອງພຣະເຢຊູເຖິງທຸກໆຄຣິສຕະຈັກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພຣະນິມິດ 2:1-11; 3:1-6, 14-21

**<u>ພູມຫລັງຂອງພຣະຄັມພີ</u>**: ພຣະນິມິດ ບົດທີ 2 ແລະ ບົດທີ 3

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຢຊູຊົງຕັສສັ່ງແລະຮຽກເອີ້ນໃຫ້ທຸກໆຄຣິສຕະຈັກສຳນຶກຕົວ ແລະ ໃຫ້ມີຄວາມ ເຊື່ອຢ່າງແທ້ຈິງ.

**<u>ຄຳຖາມ ເພື່ອການຄົ້ນຄວ້າ</u>**: ພຣະເຢຊູຄຣິດເຈົ້າມີພຣະປະສົງຫຍັງຈາກຄຣິສຕະຈັກຂອງພວກເຮົາ?

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະອະທິບາຍໃຫ້ເຂົ້າໃຈໃນຈົດໝາຍແລະໃນການປະພຶດຕົວໃນຄຣິສ ຕະຈັກຂອງພວກເຮົາ.

## <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຍົກຈົດໝາຍຂຶ້ນ, ຈົດໝາຍທີ່ມາຈາກໄປສະນີ. ນຳພານັກຮຽນອ່ານແລະສົນທະນາໃນຄຳຖາມຕໍ່ໄປນີ້:
   - ທ່ານມີຄວາມຮູ້ສຶກຢ່າງໃດໃນການໄດ້ຮັບຈົດໝາຍ?
   - ເມື່ອທ່ານຫາກຮູ້ສຶກວ່າເປັນຈົດໝາຍພິເສດທ່ານຈະຮັກສາມັນບໍ່?
   - ທ່ານເຄີຍໄດ້ຮັບຈົດໝາຍທີ່ມີແຕ່ການຕຳໜິຕິຕຽນບໍ່?
   - ທ່ານເຄີຍໄດ້ຮັບຈົດໝາຍທີ່ມີການໜູນໃຈບໍ່?
   - ຖ້າທ່ານຫາກໄດ້ຮັບຈົດໝາຍຈາກພຣະເຢຊູ, ທ່ານຈະມີປະຕິກິຣິຍາຢ່າງໃດ? ຈະເປັນຄຳຕິຕຽນຫລື ຄຳຍົກຍ້ອງກໍຕາມ.

ມື້ນີ້ພວກເຮົາຈະສຶກສາຈົດໝາຍທີ່ມາເຖິງຄຣິສຕະຈັກໃນສມັຍທຳອິດທີ່ຢູ່ເຂດເອເຊັຽ. ຈົດໝາຍນີ້ຂຽນ ຈາກໂຢຮັນສາວົກຂອງພຣະເຢຊູ. ພວກເຮົາຫວັງວ່າຖ້ອຍຄຳໃນຈົດໝາຍນີ້ຈະຊ່ວຍຄຣິສຕະຈັກແລະຕົວ ເຮົາເອງດ້ວຍ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ຖ້າຈະໃຫ້ດີແທ້ນັ້ນ ຄຣູຕ້ອງໄດ້ຄົ້ນຄວ້າໃນຄູ່ມືອະທິບາຍພຣະຄັມພີເສັຽກ່ອນ ເພື່ອຈະໄດ້ຮູ້ວ່າແຕ່ລະ ເມືອງຕັ້ງຢູ່ໃສ ຫລືບໍ່ດັ່ງນັ້ນກໍໃຫ້ມີແຜນທີ່ເພື່ອຈະເປັນການສະດວກຕໍ່ການສອນ.

3. ໃຫ້ນັກຮຽນອ່ານ ດານີເອນ 7:9-10 ແລະ 7:13-14 ຖາມນັກຮຽນ: ທ່ານມີຄວາມຮູ້ສຶກຢ່າງໃດກ່ຽວກັບພຣະເຢຊູ, ພຣະບຸດຂອງພຣະເຈົ້າ, ບຸດມະນຸດ. ມີການທ້າທາຍຢ່າງໃດຕໍ່ຊີວິດຂອງພວກເຮົາໃນເມື່ອພວກເຮົາຫາກຫຍັບເຂົ້າໃກ້ພຣະອົງທຸກວັນ.

4. ອ່ານພຣະນິມິດ 2:1-7. ໃນຕອນນີ້ແມ່ນຈິດໝາຍມາເຖິງທຸກໆຄຣິສຕະຈັກ. ພາສາຕ່າງໆອາດຈະເປັນຮູບພາບດັ່ງນັ້ນເຮົາຕ້ອງທຳຄວາມເຂົ້າໃຈກັບຮູບພາບຫລາຍໆ. ຖາມ: ທ່ານຄິດບໍ່ວ່າຄົນໃນສມັຍເກົ່ານັ້ນ ເມື່ອອ່ານແລ້ວຈະເຂົ້າໃຈໂລດບໍ່? ເປັນຫຍັງ?

5. ກັບມາຫາຄຣິສຕະຈັກເອເຟໂຊ. ຖາມ: ພຣະເຢຊູສັ່ງໂບດນີ້ວ່າຢ່າງໃດແດ່? ຖ້າພວກເຂົາຫາກບໍ່ກັບໃຈພຣະອົງຈະຍົກເຄື່ອງຮອງຕີນໂຄມຂອງເຂົາອອກຈາກບ່ອນຂອງມັນ. ຖາມ:ພວກເຂົາຂາດຄວາມຮັກດັ້ງເດີມແມ່ນບໍ? ຈົ່ງສຳນຶກຕົວສາ. ແລະແມ່ນຫຍັງເຮັດໃຫ້ພວກທ່ານປະລະຄວາມຮັກດັ້ງເດີມ.

6. ອ່ານ ພຣະນິມິດ 2:8-11 ຖາມ: ທ່ານເຫັນຫຍັງແດ່ທີ່ໂບດ ຊາມີນາ? ພວກເຂົາຖືກການຂົ່ມເຫັງ, ມີຄວາມລຳບາກ ພວກເຂົາຕ້ອງການ ໆໜູນໃຈ ຕ້ອງການກຳລັງໃຈ. ຈົ່ງສັດຊື່ຈົນເຖິງຕາຍ.

7. ອ່ານ 3:1-6. ຄຣິສຕະຈັກແຫ່ງນີ້ ຖືກຕັກເຕືອນວ່າມີຄວາມເຊື່ອແບບຢືນມື້ຢູ່. ອະທິບາຍຄຳວ່າຢືນມື້ຢູ່. ເຮົາດຳເນີນຊີວິດຢ່າງໃດແລະມີການສະແດງອອກຢ່າງໃດ, ຄຣູຈະອະທິບາຍ.

8. ອ່ານ 3:14-22 ເມື່ອອ່ານສຸດແລ້ວ ຄຣູຈະໃຫ້ນັກຮຽນສົນທະນາກໍໄດ້ວ່າຄວາມເຊື່ອສຳລັບຕົນເອງມີອາການເປັນຢ່າງໃດ? ປຽບທຽບກັບນ້ຳທີ່ອຸ່ນໆ ຈະເອົາແທ້ກໍບໍ່ເອົາ ຈະເຢັນກໍບໍ່ເຢັນ ເປັນພໍລຳຄານ. "ເຮົາຈະຄາຍເຈົ້າອອກຈາກປາກຂອງເຮົາ."

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ເບິ່ງຄືນຂໍ້ພຣະຄັມພີແລ້ວກໍຖາມ, ສິ່ງທັງໝົດທີ່ຜ່ານມານີ້ຜົນອອກມາຈະເປັນຢ່າງໃດ? ການຕັດສິນລົງໂທດຈະມາເຖິງພວກເຮົາບໍ່?

10. ໂບດຂອງພວກເຮົາເປັນຢ່າງ ເປີດໂອກາດໃຫ້ສົນທະນາ

11. ອ້ອນວອນເພື່ອການນະມັສການ ອະທິຖານເພື່ອໂບດຂອງພວກເຮົາດ້ວຍ.

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 3

# ລູກແກະທີ່ມີຄຸນຄ່າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ 4: 1-7

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ ບົດທີ 4 ແລະທີ 5

**ຈຸດສຳຄັນສຳລັບບົດຮຽນນີ້:** ທິວທັດການນະມັສການເທິງແຜ່ນດິນສວັນເປັນທີ່ມາຂອງປວັດສາດແລະຄວາມໝາຍຂອງມະນຸດຊາດ

**ຄຳຖາມເພື່ອການຄົ້ນຄວ້າ**: ເຮັດຢ່າງໃດພວກເຮົາຈຶ່ງຈະເຂົ້າໃຈຄວາມໝາຍ ຄວາມເປັນມາຂອງປວັດສາດແລະຊີວິດຂອງພວກເຮົາ.

**ຈຸດປະສົງຂອງບົດຮຽນນີ້**: ໂຢຮັນໄດ້ໃຊ້ຮູບພາບທີ່ສົດສວຍງົດງາມ ເພື່ອຈະຂຍາຍຮູບພາບໃນແຜ່ນດິນສວັນກັບພຣະເຢຊູຊຶ່ງເປັນທິວທັດການນະມັສການທີ່ມີຄວາມໝາຍແລະມີຄຸນຄ່າ.

## ແຜນສຳລັບການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລີ້ມຕົ້ນຫ້ອງຮຽນດ້ວຍການວາງຄຳຖາມວ່າ ໃຜເຄີຍໄດ້ຍິນເພງທີ່ສັຣເສີນພຣະເມຊີອາ (ແກະນ້ອຍທີ່ຖືກຂ້າ ຊ່າງມີຄຸນຄ່າເຫລືອຫລາຍ ເມື່ອທ່ານໄດ້ຍິນຄຳເວົ້າຢ່າງນີ້ແລ້ວທ່ານມີຄວາມຮູ້ສຶກຢ່າງໃດ. ຄຳເວົ້າຂອງເຂົາເຈົ້າແມ່ນມີຈຸດປະສົງອັນໃດ. ຫລັງຈາກສອງສາມຄົນໃຫ້ຄວາມຄິດເຫັນແລ້ວ ຄຣູຈະກ່າວວ່າ ບົດຮຽນໃນວັນນີ້ພວກເຮົາຈະເວົ້າເຖິງລູກແກະນ້ອຍທີ່ຖືກຂ້າ.

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ອ່ານພຣະນິມິດ 4:1-6. ຈົ່ງຈື່ໄວ້ວ່າພຣະທີ່ນັ່ງເທິງແຜ່ນດິນສວັນ. ປະຕູສວັນເປີດຢູ່. ຖາມວ່າ: ສຽງທີ່ດັງຂຶ້ນມາເປັນສຽງຢ່າງໃດ? ໃຫ້ນັກຮຽນຕອບ. ຫລາຍຄົນອາດຈະໃຊ້ສຳນຽງແລະການອະທິບາຍຮູບພາບແຕກຕ່າງກັນແດ່ເລັກນ້ອຍ. ຫລືທ່ານຄິດວ່າ ການອະທິບາຍຂອງພວກເຮົາຖືກຕ້ອງແລ້ວບໍ່? ຖ້າບໍ່ຖືກ ເປັນຫຍັງ?

3. ອ່ານໃຫ້ດັງໆ ພຣະນິມິດ 5:1-8 ແລະໃຫ້ເບິ່ງເຈັ້ງບົດຮຽນໄປດ້ວຍ ຄຳວ່າ ລູກແກະນ້ອຍ (ພຣະເມສານ້ອຍ) ທີ່ມີຄຸນຄ່າ. ຍັງຄິດເຖິງພຣະຄັມພີຂໍ້ໃດບໍ່ທີ່ກ່າວເຖິງພຣະເມສານ້ອຍ ຫລືກ່ຽວກັບລູກແກະ

ຂອງພຣະເຈົ້າທີ່ຊາວຍິວໄດ້ຂ້າຖວາຍແກ່ພຣະເຈົ້າໃນພຣະຄັມພີເດີມ. (ອົພຍົບ 12:1-8 ແລະ ໂຢຮັນ 1:29) ແຕ່ຢ່າລືມວ່າ ພຣະເມສານ້ອຍຜູ້ທີ່ມີຄຸນຄ່າ ແລະເປັນຜູ້ທີ່ສົມຄວນ. ພຣະອົງເປັນຜູ້ທີ່ສົມບູນທຸກຢ່າງ, ມີພຣະວິນຍານບໍຣິສຸດທຸກຢ່າງ, ວິນຍານແຫ່ງປັນຍາ, ວິນຍານແຫ່ງຄວາມເຂົ້າໃຈ, ວິນຍານແຫ່ງການວິຈາຣະນາຍານ, ວິນຍານແຫ່ງຄວາມຮູ້ການຢຳເກງພຣະເຈົ້າ. ຖາມ: ມີໃຜທີ່ຈະສົມຄວນກວ່າທ່ານຜູ້ນີ້. ມະນຸດຂອງພວກເຮົາສາມາດມີຄົບຖ້ວນເໝືອນພຣະອົງບໍ່?

ຈົ່ງຣະມັດຣະວັງ ໃນພຣະນິມິດ 5:8 ພວກເຮົາຈະເຫັນສັດທັງສີ່ແລະບັນດາຜູ້ອາວຸໂສຂາບລົງຖວາຍບັງຄົມແກ່ພຣະເມສານ້ອຍ. ຖາມ: ຂັນທອງຄຳເຕັມດ້ວຍເຄື່ອງຫອມຊຶ່ງເປັນຄຳອະທິຖານ ໝາຍຄວາມວ່າຢ່າງໃດ?

4. ອ່ານພຣະນິມິດ 5:11-12 ຄຣູອະທິບາຍເຖິງຄວາມຍິ່ງໃຫຍ່ຂອງຄະນະນັກຮ້ອງຊຶ່ງຢູ່ອ້ອມພຣະທີ່ນັ່ງນັ້ນ ແລະອະທິບາຍເຖິງບົດເພງດ້ວຍ. ຫລາຍຄົນຈະຖວາຍກຽດວ່າພຣະອົງເຮັດຫຍັງໃຫ້ພວກເຮົາແດ່. ບໍ່ແມ່ນແຕ່ທີ່ນັ້ນ ພວກເຮົາສັຣເສີນໃນຄຸນລັກສະນະຂອງພຣະອົງດ້ວຍ. ຖາມຫ້ອງຮຽນໃຫ້ບອກເຖິງຄຸນລັກສະນະຂອງພຣະເຢຊູຄຣິດວ່າພວກເຮົາສົມຄວນຈະສັຣເສີນພຣະອົງຢ່າງໃດ?

ຂຽນຄຸນລັກສະນະຂອງພຣະເຢຊູລົງໃນກະດານ ໃຫ້ນັກຮຽນອອກມາຂຽນ ເພື່ອຈະໄດ້ຈົດຈຳ ແລະສຸດທ້າຍ ຖາມ:ມີທາງອື່ນອີກບໍ່ທີ່ພວກເຮົາຈະສັຣເສີນພຣະອົງ? ໃຫ້ນັກຮຽນຕອບຈັກສອງສາມຄົນ.

ບອກໃຫ້ນັກຮຽນຮູ້ຢ່າງຄັກແນ່ຊຶ່ງໄດ້ບັນທຶກໄວ້ແລ້ວວ່າບໍ່ມີຜູ້ໃດທີ່ຈະເໝາະສົມ ມີແຕ່ພຣະເຢຊູ (ພຣະເມສານ້ອຍ)ເທົ່ານັ້ນ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ທ່ານໄດ້ເຫັນຫຍັງແດ່ໃນການນະມັສການໃນແຜ່ນດິນສວັນ? ນັກຮຽນຕອບຈັກສອງຄົນ. ແລະພວກເຮົາເຫັນຫຍັງແດ່ໃນໂບດຂອງພວກເຮົາ ເວລານະມັສການ? ພວກເຮົາຄວນຈະປັບປຸງບໍ່? ປັບປຸງຢ່າງໃດ? ໃຫ້ເວລາສອງສາມນາທີ ສົນທະນາ. ການນະມັສການທີ່ນີ້ ແລະສວັນຄວນແຕກຕ່າງກັນບໍ່? ຖ້າແຕກຕ່າງເປັນຫຍັງ ແລະຖ້າບໍ່ແຕກຕ່າງເດ?
ໃນບົດຕໍ່ໄປພວກເຮົາຍັງຈະເຫັນຄວາມຍິ່ງໃຫຍ່ໃນແຜ່ນດິນສວັນຫລາຍກວ່ານີ້. ແລະພວກເຮົາຈະໄດ້ເຫັນວ່າພຣະເຢຊູຊົງຄຸ້ມຄອງໂລກຢ່າງແທ້ຈິງ.

6. ນຳພານັກຮຽນອ້ອນວອນອະທິຖານ ຂໍການຊົງນຳຈາກພຣະເຈົ້າໃນທຸກແງ່ທຸກມຸມຂອງຊີວິດ. ເພື່ອພຣະອົງຈະໄດ້ເປີດຕາໃຈ ແລະເຂົ້ານະມັສການພຣະເຈົ້າ.

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ຕາປະທັບອັນທີ 6 ໄດ້ເປີດແລ້ວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພຣະນິມິດ 6

**ພູມຫລັງຂອງພຣະຄັມພີ:** ພຣະນິມິດ 6

**ຈຸດສຳຄັນຂອງບົດຮຽນນີ້:** ເທົ່າທີ່ພຣະເຈົ້າໄດ້ຈັດແຈງວັນສຸດທ້າຍ, ພຣະອົງຈະນຳການຕັດສິນຫລາຍຢ່າງເຂົ້າມາໃນໂລກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງການຕັດສິນຈຳເປັນຕ້ອງເກີດຂຶ້ນ?

**ຈຸດປະສົງຂອງບົດຮຽນ:** ເພື່ອອະທິບາຍເຖິງຄວາມໝາຍຂອງຕາປະທັບທີ 6 ແລະເອົາມາປະກອບໃຊ້ໃນຊີວິດໃນທຸກວັນນີ້.

## ບົດນຳ

ໃນນີ້ໂຢຮັນໄດ້ໃຊ້ຮູບພາບຈາກພຣະຄັມພີເດີມໃນນິມິດ ເໝືອນໃນປຶ້ມ ເຊຄາຣີຢາ ໄດ້ເຫັນນິມິດມ້າມີຄົນຂີ່ອ້ອມ ຮັກສາເບິ່ງໂລກເພື່ອເອົາຂ່າວດີຈາກພຣະເຈົ້າມາເຖິງມະນຸດ ເຮັດໃຫ້ພວກເຂົາມີຄວາມຫວັງຂຶ້ນ (ຊຄຢ 1:8-17; 6:1-8). ໂດຍສະເພາະນິມິດຂອງໂຢຮັນແລ້ວເປັນພິເສດເຫັນມ້າແລະຄົນຂີ່ເພາະມັນເປັນເຣື່ອງດີຕໍ່ຄຣິສຕະຈັກທັງເຈັດໃນພຣະນິມິດບົດ 2 ແລະສາມ. ເລກເຈັດຕາມທຳນຽມຊາວຢິວແລ້ວໝາຍເຖິງຄົບບໍຣິບູນ ໝາຍຄວາມວ່າໂຢຮັນໄດ້ເຫັນໃນນິມິດນັ້ນແມ່ນເພື່ອຄຣິສຕະຈັກໃນສມັຍກ່ອນແລະສມັຍດຽວນີ້.

ພຣະນິມິດບົດທີຫ້າມີຄວາມຜູກພັນດີກັບບົດກ່ອນນັ້ນ. ບົດທີ 1 ໄດ້ເປີດໃຫ້ຮູ້ຈັກດ້ວຍນິມິດເຖິງຄວາມຍິ່ງໃຫຍ່ ແລະພລັງອຳນາດຂອງອົງພຣະເຢຊູຄຣິດເຈົ້າ. ບົດທີ 2 ແລະ 3 ກ່າວວ່າອົງພຣະຄຣິດຢູ່ຖ້າມກາງຄຣິສຕະຈັກຕ່າງໆ ເພື່ອທ້າທາຍແລະສິດສອນໃຫ້ພວກເຂົາຕັ້ງໝັ້ນຢູ່ໃນຄວາມເຊື່ອ. ບົດທີ 4 ອະທິບາຍເຖິງນິມິດເຫັນພຣະເຈົ້າ ແລະເມືອງຟ້າສວັນ, ແລະບົດທີ 5 ໃນນິມິດເຫັນອົງພຣະເຢຊູເປັນສິງ ແລະເປັນພຣະເມສານ້ອຍ. ບົດກ່ອນໆກໍຍັງໄດ້ເວົ້າເຖິງມານຊາຕານຈະໄດ້ໝົດອຳນາດລົງໃນບົດທີ 6. ພຣະເຈົ້າເປັນຜູ້ຊົງສ້າງແລະບັງຄັບບັນຊາ ແລະໂຢຮັນຍັງຫັນໄປກ່າວເຖິງເຣື່ອງມານອີກ.

ນິມິດຂອງໂຢຮັນໄດ້ກ່າວເຖິງອະດີດ, ປັດຈຸບັນ, ແລະອະນາຄົດ. ໂດຍອົງພຣະວິນຍານບໍຣິສຸດ ໂຢຮັນໄດ້ເປີດຊັຍຊະນະຂອງອົງພຣະຄຣິດຕາມປວັດສາດ ແລະຈົນເຖິງຄາວສຸດທ້າຍ. ຖ້າຢາກຈະເຂົ້າໃຈດີພວກເຮົາຕ້ອງເຂົ້າໃຈສມັຍຂອງໂຢຮັນວ່າເປັນແນວໃດ ເໝືອນກັບພວກເຮົາຢາກຈະເຂົ້າໃຈປຶ້ມພຣະຄັມພີອື່ນໆ. ແນວໃດກໍຕາມຄຳຂວັນຫລືຄຳສອນໃນປຶ້ມຕ່າງໆນັ້ນກໍບໍ່ໄດ້ແຕກຕ່າງກັນບໍ່ວ່າໃນສມັຍໃດກໍຕາມ. ອົງພຣະວິນຍານບໍຣິສຸດເປັນຜູ້ນຳພາ ໂຢຮັນຈຶ່ງໄດ້ເຫັນພລັງອຳນາດໃນປະວັດສາດຍັງເຮັດວຽກເໝືອນກັນໃນສມັຍ

ນີ້ ເພາະອົງພຣະຄຣິດຈະເປັນຜູ້ນຳພາເຮັດໃຫ້ປະວັດສາດຄົບຖ້ວນດ້ວຍການມີຊັຍຊະນະ ແລະການນັ່ງບັນລັງຂອງພຣະອົງ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ຈັດແຈງຫ້ອງຮຽນໃຫ້ເປັນສານຕັດສິນ. ບອກໃຫ້ສະມາຊິກໃນຫ້ອງຮຽນສມັກ 1. ເປັນຫົວໜ້າສານ. 2. ເປັນຜູ້ຟັງຄະດີເພື່ອຕັດສິນເປັນກຸ່ມ. 3. ເປັນທະນາຍຄວາມ ຜູ້ຟ້ອງ ຜູ້ປ້ອງກັນ. 4. ພະຍານ. ແລະອື່ນໆ. ຖາມວ່າໃນສານນີ້ແມ່ນໃຜເປັນຜູ້ສຳຄັນກວ່າໝູ່? ກ່າວວ່າຫົວໜ້າສານເປັນຜູ້ສຳຄັນ ເພາະລາວມີສິດຕັດສິນໃຈວ່າໃຜເປັນຄົນຜິດ ແລະໃຜເປັນຄົນຖືກ.
2. ບອກວ່າໃນປື້ມພຣະນິມິດນີ້ ພຣະເຈົ້າເປັນຜູ້ຕັດສິນ ເມື່ອອົງພຣະເມສານ້ອຍໄດ້ເປີດຕາປະທັບ.
3. ເອົາຈົດໝາຍທີ່ມີຕາປະທັບມາໃນຫ້ອງຮຽນ ແລະຕັ້ງຄຳຖາມວ່າແມ່ນໃຜມີສິດເປີດຈົດໝາຍນີ້? ຄຳຕອບແມ່ນຜູ້ມີຊື່ເທິງຈົດໝາຍນັ້ນ. ເຊີນໃຫ້ຄົນນຶ່ງອ່ານ ພຣະນິມິດບົດ 6:1 ແລະຖາມວ່າໃຜເປັນຜູ້ດຽວທີ່ສົມຄວນເປີດຕາປະທັບນັ້ນ? (ຄຳຕອບ: ພຣະເມສານ້ອຍ)
4. ແບ່ງຫ້ອງອອກໄປສີ່ກຸ່ມຕາມຈຳນວນຄົນທີ່ມີ ແລະບອກໃຫ້ແຕ່ລະກຸ່ມອ່ານດັ່ງຕໍ່ໄປນີ້:
    1. ມ້າສີຂາວ-ພຣະນິມິດ 6:2
    2. ມ້າສີແດງ-ພຣະນິມິດ 6:3-4
    3. ມ້າສີດຳ-ພຣະນິມິດ 6:5-6
    4. ມ້າສີຂຽວ-ພຣະນິມິດ 6:7-8

   ບອກໃຫ້ແຕ່ລະກຸ່ມລາຍງານວ່າສິ່ງທີ່ພວກເຂົາອ່ານນັ້ນມີຄວາມໝາຍຢ່າງໃດ ແລະເລືອກຜູ້ລາຍງານໃຫ້ທຸກຄົນໄດ້ຍິນເປັນລຳດັບໄປ.
5. ບ່ອນວ່າພຣະເຈົ້າເປັນຜູ້ປົກຄອງໂລກນີ້ ພວກເຮົາຄວນໄວ້ວາງໃຈໃນພຣະອົງບໍ່ວ່າພວກເຮົາຈະຢູ່ໃນສະພາບໃດ ດີຫລືຮ້າຍ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 5

## ຢຸດພັກຕອນທີນຶ່ງ: ປະຊາກອນຂອງພຣະເຈົ້າຖືກຮັກສາເອົາໄວ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພຣະນິມິດ 7

**ພູມຫລັງຂອງພຣະຄັມພີ:** ພຣະນິມິດ 7

**ຈຸດສຳຄັນຂອງບົດຮຽນນີ້:** ຖ້າມກາງການລົງໂທດອັນໃຫຍ່ ປະຊາກອນຂອງພຣະເຈົ້າຖືກຮັກສາເອົາໄວ້.

**ຄຳຖາມເພື່ອການຄົ້ນຄວ້າ:** ອັນໃດແມ່ນບໍ່ເກີດຂອງຄວາມຫວັງ ແລະຖ້າມກາງຄວາມໝົດຫວັງ?

**ຈຸດປະສົງຂອງບົດຮຽນ:** ເພື່ອສຳຣວດເຖິງພາບຂອງການຢຸດພັກວ່າແມ່ນຫຍັງແລະມີຄວາມໝາຍຢ່າງໃດ ເພື່ອຈະເອົາມາປະກອບໃຊ້ໃນຊີວິດຂອງຕົນເອງ.

### ບົດນຳ

ພວກນັກແປພຣະຄັມພີເອີ້ນພຣະນິມິດບົດທີ 7 ນີ້ວ່າຢຸດພັກເຄິ່ງເຣື່ອງ. ທັງໝົດໄດ້ກ່າວເຖິງປະຊາກອນຂອງພຣະເຈົ້າໃນເຣື່ອງຕາປະທັບທີກອັນໄດ້ຖືກເປີດໃນບົດທີ 6. ບົດ 7 ໂຢຮັນໄດ້ກັບໄປກ່າວເຖິງນິມິດເຫັນອົງພຣະຄຣິດໃນ ບົດທີ 1. ອົງພຣະເຢຊູໄດ້ຢູ່ເໜືອຄຣິສຕະຈັກໃນບົດ 2-3, ພຣະເຈົ້າໄດ້ນັ່ງພຣະຣາຊບັນລັງ ບົດ 4 ແລະພຣະເມສານ້ອຍໄດ້ຊັຍຊະນະແລະໄດ້ປົກຄອງໃນບົດ 5. ຄຳຖາມມີຢູ່ວ່ານິມິດທີ່ໂຢຮັນໄດ້ເຫັນນັ້ນໄດ້ກ່ຽວຂ້ອງກັບຄົນເຊື່ອທີ່ຖືກຂົ່ມເຫງຢ່າງໃດ?

ໂຢຮັນຜູ້ຖືກດົນບັນດານດ້ວຍອົງພຣະວິນຍານບໍຣິສຸດ ເພິ່ນໄດ້ເຫັນກຳລັງຈາກພຣະເຈົ້າແລະມານໄດ້ດຳລົງຢູ່ໃນປະວັດສາດ. ການເປັນທຸກແລະຖືກທໍຣະມານເກີດຂຶ້ນກໍເພາະຄວາມຊົ່ວ. ຄຣິສະຕຽນກໍໄດ້ເປັນທຸກເໝືອນກັບຄົນອື່ນເພາະຍ້ອນເຣື່ອງຂອງຄວາມບາບ. ຄຳຖາມໃນບົດທີ 7 ໄດ້ເວົ້າເຖິງການລົງໂທດຄວາມຊົ່ວຊ້າໃນບົດທີ 6 ຈະບໍ່ມີຜູ້ໃດຫລີກເວັ້ນໄດ້ຢ່າງເດັດຂາດ (6:12-17).

ປະຊາກອນຂອງພຣະເຈົ້າຖືກທໍຣະມານເພາະພວກເຂົາຍັງຢູ່ໃນໂລກແຫ່ງນີ້, ແຕ່ພວກເຂົາບໍ່ເປັນຂອງໂລກ (ໂຢຮັນ 17:15). ຕາມໂທຣະທັດ ຫລືໜັງສືພິມມີຂ່າວລາຍງານວ່າຄຣິສຕຽນໄດ້ຖືກຂ້າ, ເສັຽເຮືອນພັກ, ຫລືໝູ່ຄູ່ ກໍເພາະຄວາມຊົ່ວໃນໂລກ. ແນ່ນອນຄົນທີ່ເຊື່ອໃນພຣະເຈົ້າໄດ້ຮັບຄວາມທຸກຊຶ່ງໂຢຮັນໄດ້ກ່າວໃນນິມິດເພື່ອຈະໄດ້ໜູນໃຈຜູ້ທີ່ເຊື່ອໃນສມັຍຂອງເພິ່ນ ແລະສມັຍຕໍ່ໄປໃຫ້ເຊື່ອໝັ້ນ. ຕາບໃດທີ່ຍັງມີຄວາມຊົ່ວຢູ່ ແລະຈົນເຖິງເວລາພຣະເຈົ້າໄດ້ຢຸດດ້ວຍການຕັດສິນລົງໂທດດ້ວຍການເປັນທຸກ. ແຕ່ໃຫ້ເຂົ້າ

ໃຈດີວ່າຜູ້ທີ່ເຊື່ອທີ່ໄດ້ຮັບການເປັນທຸກນັ້ນ ພຣະເຈົ້າສັນຍາໃນນິມິດຂອງໂຢຮັນວ່າ ພວກເຂົາໄດ້ຖືກຮັກສາປົກປ້ອງເອົາໄວ້.

ປຶ້ມພຣະນິມິດໄດ້ບອກຢ່າງແຈ່ມແຈ້ງວ່າຜູ້ທີ່ເລືອກເຮັດຄວາມຊົ່ວນັ້ນຈະບໍ່ສາມາດຕໍ່ສູ້ພລັງອຳນາດຂອງພຣະເຈົ້າໄດ້ຢ່າງເດັດຂາດ. ໃນວັນສຸດທ້າຍ ພວກເຂົາໄດ້ເອີ້ນຫາພູເຂົາແລະໝາກຫີນໃຫ້ຕົກມາໃສ່ເພື່ອຈະລີ້ຕົວຈາກພຣະພັກຂອງອົງພຣະຜູ້ເປັນເຈົ້າ ແລະອົງພຣະເຢຊູ (ພນມ 6:16). ໃນບົດທີ 7 ໄດ້ປະກາດວ່າປະຊາກອນຂອງພຣະເຈົ້າໄດ້ຊັຍຊະນະເພາະພວກເຂົາເປັນຂອງພຣະອົງ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

6. ນຳເອົາແຜ່ນຟອງນ້ຳນວມທີ່ຜູ້ສົ່ງເຄື່ອງໄດ້ໃຊ້ເວລາເຂົາສົ່ງສິ່ງທີ່ເປັນແກ້ວ ຫລືເປັນຂອງມັກແຕກຫັກມາໃນຫ້ອງຮຽນ. ຖາມສະມາຊິກໃນຫ້ອງວ່າມີເຄື່ອງຊະນິດໃດພວກເຂົາຕ້ອງການແຜ່ນນວມແບບນີ້ທໍ່? ເປັນຫຍັງຈຶ່ງເຮັດຢ່າງນັ້ນ?
7. ເຕືອນສະມາຊິກວ່າບົດຮຽນກ່ອນພວກເຂົາໄດ້ຮຽນເຖິງພຣະເມສານ້ອຍໄດ້ເປີດຕາປະທັບ ແລະສິ່ງພັຍວິບັດມາໃນໂລກ. ກ່າວວ່າ ບໍ່ແມ່ນທຸກຄົນໄດ້ປະຕິເສດອົງພຣະຄຣິດ ບາງຄົນກໍຮັບເອົາດ້ວຍຄວາມສັດຊື່ ເຖິງແມ່ນຖືກຂົ່ມເຫງເພາະຄວາມເຊື່ອນັ້ນ. ໃນບົດຮຽນວັນນີ້ໄດ້ເວົ້າເຖິງຜູ້ມີຄວາມເຊື່ອ ແລະວິທີທີ່ພຣະເຈົ້າໄດ້ຕອບສນອງຄວາມຕ້ອງການຂອງພວກເຂົາໃນພຣະນິມິດບົດ 7.
8. ເອີ້ນໃຫ້ຄົນນຶ່ງສມັກອ່ານ ພຣະນິມິດ ບົດ 7:1-8. ໃຫ້ແຕ່ລະຄົນອະທິບາຍເຖິງຄວາມໝາຍຂອງຕາປະທັບ. ຕັ້ງຄຳຖາມວ່າພວກເຂົາເຄີຍສັງເກດເບິ່ງໃບປະກາດສະນີຍະບັດບໍ? ຖ້າແມ່ນຂອງແທ້ຕ້ອງມີຕາປະທັບ ແລະລາຍເຊັນຂອງເຈົ້າໜ້າທີ່ໂຮງຮຽນ.
9. ບອກໃຫ້ຄົນນຶ່ງອ່ານ ພຣະນິມິດບົດ 7:9-12. ບອກວ່າຈະມີຄົນຈາກທົ່ວໂລກໄດ້ເຂົ້າໄປຍັງພຣະພັກຂອງພຣະເຈົ້າເພາະເຂົາໄດ້ເປັນປະຊາກອນຂອງພຣະເຈົ້າດ້ວຍຄວາມເຊື່ອ. ດັ່ງນັ້ນ, ເຖິງແມ່ນພວກເຮົາຜູ້ທີ່ເຊື່ອໄດ້ຮັບການເປັນທຸກ ແລະຖືກຂົ່ມເຫງ ພວກເຮົາສາມາດເອົາຊະນະໄດ້ເພາະອົງພຣະເຢຊູໄດ້ເຮັດເພື່ອເຮົາແລ້ວທີ່ໄມ້ກາງແຂນ.
10. ອ່ານພຣະນິມິດບົດ 7:13-17 ກ່າວວ່າ ພຣະຄັມພີໄດ້ເວົ້າຢ່າງແຈ່ມແຈ້ງວ່າຜູ້ທີ່ມີຕາປະທັບຂອງອົງພຣະຄຣິດເປັນຜູ້ຊະນະທຸກຄົນ. ບຸກຄະລິກລັກສະນະຂອງຄົນໃນສວັນ (ພນມ 15-17). ພວກເຂົາເປັນທຸກຊົ່ວຄາວ, ແຕ່ພວກເຂົາໄດ້ສຳເຣັດຢ່າງໜ້າສັຣເສີນ. ສິ່ງນີ້ຄວນເປັນກຳລັງໃຈໃຫ້ພວກເຮົາອົດທົນຕໍ່ບັນຫາປະຈຳວັນ ແລະມີຊີວິດຢູ່ດ້ວຍຄວາມສັດຊື່ຕໍ່ພຣະເຈົ້າ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# <u>ສຽງແກແຫ່ງການຕັດສິນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພຣະນິມິດ 8; 9:1-6, 13-15, 20-21

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 8 ແລະ 9

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຈະຕັດສິນພວກສັດຕູຂອງພຣະອົງຢ່າງເຂັ້ມງວດ ແລະຈະບໍ່ມີທາງຫລີກເວັ້ນໄດ້ເດັດຂາດ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພຣະເຈົ້າຈະເອົາຊະນະຄວາມຊົ່ວແທ້ບໍ່?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອເຮັດເປັນໂຄງຮ່າງວ່າອັນໃດປະກອບໃນສຽງແກຄັ້ງທີທີກວ່າພຣະເຈົ້າຈະຕັດສິນ ແລະເອົາປະກອບໃຊ້ໃນຊີວິດໃນປັດຈຸບັນນີ້.

## ບົດນຳ

ໃນພຣະນິມິດບົດ 8 ໂຢຮັນໄດ້ເວົ້າເຣື່ອງເປີດຕາປະທັບອັນທີ 7 ແລະມີຄວາມມິດງຽບໃນສວັນປະມານເຄິ່ງຊົ່ວໂມງ. ອົງພຣະເຢຊູເປັນຜູ້ມີຄຸນຄ່າອົງດຽວເທົ່ານັ້ນທີ່ຈະເປີດກໍ້ມ້ວນຊຶ່ງມີຕາປະທັບເຈັດອັນ (ພນມ 5:1-6:1). ກໍ້ມ້ວນ ເປັນສັນຍາລັກເຖິງສິ່ງທີ່ພຣະເຈົ້າຈະເປີດໃຫ້ຮູ້. ບໍ່ມີຜູ້ໃດໃນໂລກສາມາດເປີດເຜີຍໃຫ້ຮູ້ຈັກແຜນການຂອງພຣະເຈົ້າ ເໝືອນອົງພຣະເຢຊູເຮັດໄດ້. ຫລັງອົງພຣະເຢຊູໄດ້ເປີດຕາປະທັບເຈັດອັນ, ເທວະດາເຈັດຕົນໄດ້ຮັບແກຜູ້ລະອັນ ແລະ ພາບພົດໄດ້ເຫັນໃນພຣະນິມິດບົດ 11-16. ຫລັງຈາກມີການຢຸດພັກເວລາແກທີເຈັດໄດ້ດັງສົງບລົງ, ແລະໄດ້ເຫັນຖ້ວຍເຈັດອັນມາປາກົດ. ຕາປະທັບ, ແກ, ແລະຖ້ວຍທີ່ກ່າວໃນພຣະນິມິດໝາຍເຖິງປະຊາກອນຂອງພຣະເຈົ້າຈະຖືກຮັກສາ ເອົາໄວ້ຖ້າມກາງຄວາມຕັດສິນແລະການຂົ່ມເຫງ.

ມີນັກແປພຣະຄັມພີກ່າວວ່າມີເຫດການເກີດຂຶ້ນໃຊ້ເລກເຈັດຄືມີເຈັດຕາປະທັບ, ເຈັດແກ, ແລະເຈັດຖ້ວຍ ໝາຍເຖິງການຕັດສິນຈະຮ້າຍແຮງຂຶ້ນໄປ ຈົນເຖິງອົງພຣະເຢຊູໄດ້ສະເດັດກັບຄືນມາໃນໂລກ. ແຕ່ມີບາງຄົນເຊື່ອວ່າເລກເຈັດເປັນເຫດການເກີດຂຶ້ນເວົ້າຊ້ຳໃນນິມິດຂອງໂຢຮັນເຖິງຜູ້ຕໍ່ຕ້ານພຣະເຈົ້າ ແລະພຣະອົງຈະເປັນຜູ້ຕັດສິນຊຶ່ງໄດ້ເກີດໃນສັດຕະວັດທີນຶ່ງ, ໃນປັດຈຸບັນ, ແລະກໍຈະເກີດຂຶ້ນໃນອະນາຄົດ ຫລືເວລາສຸດທ້າຍ.

ໂຢຮັນໄດ້ວາດພາບເຖິງພຍາມານໄດ້ເສັຽໄຊ, ອົງພຣະເຢຊູ ແລະຄຣິສຕະຈັກໄດ້ຮັບໄຊຊະນະໃນທີ່ສຸດ. ໂຢຮັນ ໄດ້ເຫັນນິມິດເພື່ອຈະໜູນໃຈໃຫ້ຜູ້ທີ່ເຊື່ອໝັ້ນໃຈວ່າຄວາມເຊື່ອຂອງພວກເຂົາໃນອົງພຣະເຢຊູນັ້ນຈະນຳໄປເຖິງໄຊຊະນະຄັ້ງສຸດທ້າຍ. ການຂົ່ມເຫງ, ຄວາມເຈັບ, ຄວາມຕາຍຈະໝົດໄປ. ຊ້ຳບໍ່ພໍພວກຂົ່ມເຫງ

ຄຣິສຕຽນຈະໄດ້ຖືກຕັດສິນລົງໂທດ ເພາະພວກເຂົາໄດ້ຕໍ່ສູ້ອົງພຣະເຢຊູ. ເຣື່ອງນີ້ໄດ້ສອນຄົນໃນສມັຍນີ້ວ່າຄວາມຊົ່ວຈະໄດ້ປາບໃຫ້ດັບລົງຢ່າງຜູ້ປຣາຊັຍ.

## ແນະນໍາການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

11. ຂຽນຄໍາເວົ້າຕໍ່ລົງໄປນີ້ໃສ່ກະດານ: ແສງສະຫວ່າງ, ໝາ, ຕລົກ, ຂາວ, ສລາດ, ມົນ. ເອົາເຈັ້ຽ ແລະ ສໍດໍາໃຫ້ແຕ່ລະຄົນ ບອກໃຫ້ພວກເຂົາຂຽນສິ່ງກົງກັນຂ້າມ. ຫລັງຈາກນັ້ນແລ້ວເລືອກເອົາຜູ້ສມັກອ່ານສິ່ງທີ່ຕົນເອງໄດ້ຂຽນນັ້ນໃຫ້ຄົນອື່ນຟັງ.
12. ໃຫ້ເວົ້າເຈາະຈົງໃສ່ຄໍາເວົ້າວ່າ ດີ. ບອກວ່າຄໍາກົງກັນຂ້າມແມ່ນ ຊົ່ວ ຫລືມານຮ້າຍ. ບອກວ່າໃນໂລກນີ້ຍ່ອມມີຄວາມຊົ່ວຊ້າ ແລະບາງທີພວກເຮົາຖາມວ່າມື້ໃນຄວາມຊົ່ວຊ້າຈະໝົດໄປ ຫລືພວກເຮົາສາມາດຢຸດຄວາມຊົ່ວຊ້າໄດ້ບໍ່. ບົດຮຽນວັນນີ້ໄດ້ເຕືອນພວກເຮົາວ່າຢ່າງໃດກໍຕາມຈໍາໄວ້ວ່າພຣະເຈົ້າຍັງນັ່ງພຣະບັນລັງຂອງພຣະອົງປົກຄອງຢູ່. ແນ່ນອນພຣະເຈົ້າຈະເອົາຊັຍຊະນະຄວາມຊົ່ວໃນວັນສຸດທ້າຍໃນໂລກນີ້.
13. ບອກວ່າຕໍ່ໄປນີ້ຈະມີການທົດລອງເບິ່ງວ່າສະມາຊິກໃນຫ້ອງຈະສາມາດມິດສງັດປະມານ 60 ວິນາທີ. ຫລັງຈາກນັ້ນແລ້ວຖາມສະມາຊິກວ່າໃນຕອນຢຸດສງັດປະມານ 60 ວິນາທີນັ້ນມີຫຍັງແດ່ເຂົ້າມາໃນຄວາມຄຶດ? ບອກໃຫ້ແຕ່ລະຄົນແບ່ງປັນໃຫ້ຄົນອື່ນຟັງ. ອ່ານພຣະນິມິດ 8:1 ແລະກ່າວວ່າໃນສວັນມີຄວາມມິດສງັດ. ແນ່ນອນຫລັງຈາກແກອັນທີເຈັດໄດ້ດັງຂຶ້ນອາດມີຄວາມມິດສງັດເພີ້ມອີກ. ຕັ້ງຄໍາຖາມຂຶ້ນວ່າເປັນຫຍັງ? ທຸກຄົນໃນສວັນຢາກເຫັນພຣະເຈົ້າເຮັດອັນໃດອັນນຶ່ງ. ຂໍໃຫ້ຄົນນຶ່ງອ່ານພຣະນິມິດບົດ 8:2-5 ເປັນສຽງດັງ. ບອກໃຫ້ແຕ່ລະຄົນສຶກສາແກອັນທີເຈັດນັ້ນມີຄວາມໝາຍຢ່າງໃດ?
14. ພິມຄໍາເຕືອນຕ່າງ ໆທີ່ຕິດຕາມທ້ອງຖນົນ. ຕົວຢ່າງ: ຢຸດ, ຫ້າມເຂົ້າ, ທາງປິດ, ທາງລ້ຽວ ແລະອື່ນໆ. ຕັ້ງຄໍາຖາມຂຶ້ນມາວ່າ ຄໍາເຕືອນຕ່າງໆທີ່ເຫັນນັ້ນມີຄວາມໝາຍຄືກັນຢ່າງໃດ? ຖາມອີກວ່າມີຫຍັງເກີດຂຶ້ນຖ້າພວກເຮົາບໍ່ເຊື່ອຟັງຄໍາເຕືອນເຫລົ່ານີ້? ຄໍາຕອບຄື: ແນ່ນອນພວກເຮົາຕ້ອງພົບກັບອັນຕະລາຍ. ຮ້ອງຂໍໃຫ້ຄົນນຶ່ງສມັກອ່ານ ພຣະນິມິດ 9:13-15, 20-21. ບອກເຖິງຄໍາເຕືອນຂອງນົກອິນຊີໃນບົດ 8:13 ແລະບອກເຖິງຜົນທີ່ຈະຕາມມາຖ້າບໍ່ຟັງຄໍາເຕືອນ.
15. ເອົາທຽນໄຂໃຫ້ສະມາຊິກແຕ່ລະຄົນ ແລະຖາມວ່າ ເປັນຫຍັງພວກເຮົາຈິງໃຕ້ທຽນໄຂ? ພວກເຮົາໃຕ້ທຽນໄຂເພາະຢາກເຫັນຮຸ່ງ. ແສງສະຫວ່າງເປັນສັນຍາລັກເຖິງຄວາມຫວັງ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 7

# <u>ຢຸດພັກຄັ້ງທີສອງ: ພຍານສັດຊື່</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພຣະນິມິດ 10: 1-9; 11: 1-15

**<u>ພູມຫລັງຂອງພຣະຄັມພີ</u>**: ພຣະນິມິດ 10---11

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>**: ຜູ້ຮັບໃຊ້ຂອງພຣະເຈົ້າຈະສືບຕໍ່ໃນການເປັນພຍານເຖິງຈະມີການຕໍ່ຕ້ານ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ຜູ້ຕິດຕາມພຣະຄຣິດຈະເຮັດຢ່າງໃດເວລາຖືກຕໍ່ຕ້ານເພາະຄວາມເຊື່ອຂອງພວກເຂົາ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອຊອກຫາວິທີເປັນພຍານຢ່າງສັດຊື່ທີ່ໄດ້ບັລຍາຍໄວ້ໃນເວລາຢຸດພັກລະຫວ່າງປິດສາກ.

**<u>ອ່ານລວບ:</u>** ເຖິງວ່າຫລາຍຢ່າງຈະບໍ່ເປັນໄປຕາມທີ່ພວກເຮົາຄິດໄວ້, ພວກເຮົາຈະຕ້ອງສັດຊື່ຮັບໃຊ້ພຣະຄຣິດ ແລະຈະຕ້ອງເປັນພຍານເພື່ອພຣະອົງຢ່າງກ້າຫານ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ແບ່ງກະດານອອກເປັນສອງພາກ; ພາກນຶ່ງໃຫ້ຂຽນຫົວຂໍ້ໃສ່ທາງເທິງວ່າ "ປະເທດເຮົາ" ແລະອີກຝ່າຍນຶ່ງໃຫ້ໃສ່ຫົວຂໍ້ວ່າ "ປະເທດອື່ນໆ." ຊັກຊວນນັກຮຽນໃຫ້ບອກຕົວຢ່າງເຣື່ອງການຂົ່ມເຫງ ແລ້ວຂຽນລົງໃສ່ພາກສ່ວນກ່ຽວຂ້ອງ. ເວົ້າວ່າ: ການຂົ່ມເຫງມີຫລາຍປະເພດໃນແຕ່ລະເຂດ ແລະຄວາມຮ້າຍແຮງກໍຕ່າງໆກັນໄປ. ສິ່ງເຫລົ່ານີ້ເຮັດໃຫ້ພວກເຮົາຢ້ານກົວໃນການເປັນພຍານເຣື່ອງພຣະຄິດທັງ ໆທີ່ພຣະເຈົ້າໄດ້ຊົງໃຫ້ຣິດເດດພວກເຮົາເພື່ອການເປັນພຍານຢ່າງສັດຊື່.
2. ອະທິບາຍວ່າບົດຮຽນມື້ນີ້ມາຈາກພຣະນິມິດ 10 ແລະ 11. ບົດຮຽນນີ້ຈະເຕືອນພວກເຮົາເຖິງຄວາມຮັບຜິດຊອບໃນການບອກຂ່າວປະເສີດກັບຄົນອື່ນໆ ເພາະຫລາຍຄົນຍັງບໍ່ເຂົ້າໃຈຄຳສອນຂອງພຣະເຢຊູ; ພວກເຂົາຕ້ອງການໄດ້ຍິນຂ່າວປະເສີດຈາກພວກເຮົາ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ຖາມນັກຮຽນວ່າວຽກເຮືອນແນວໃດທີ່ເຂົາເຈົ້າລັງກຽດທີ່ສຸດ ແລະເປັນຫຍັງຈຶ່ງບໍ່ມັກວຽກນັ້ນ ໆ. ຖາມ: ທ່ານຮູ້ສຶກຢ່າງໃດເວລາທ່ານຈຳຕ້ອງໄດ້ເຮັດວຽກທີ່ບໍ່ມັກ? ໃຫ້ເວລາຕອບ.ໃຫ້ຜູ້ນຶ່ງອ່ານພຣະ

ນິມິດ 10: 1-9. ໃຊ້ບົດຮຽນຊ່ວຍໃນການອະທິບາຍ. ອະທິບາຍວ່າ ໜັງສືມ້ວນນັ້ນຫວານເພາະມັນມາຈາກພຣະເຈົ້າ ແຕ່ເວລາໄປເຖິງທ້ອງແລ້ວມັນຂົມເພາະເປັນເຣື່ອງການພິພາກສາ. ເວົ້າວ່າ: ການບອກຄົນອື່ນໆເຣື່ອງພຣະເຢຊູບໍ່ແມ່ນເຣື່ອງງ່າຍ ແຕ່ເປັນສິ່ງຈຳເປັນ. ຄວາມສັດຊື່ຂອງທ່ານສາມາດປ່ຽນແປງຊີວິດຂອງໃຜຜູ້ນຶ່ງຊົ່ວນິຣັນ.

4. ຂຽນ 54/40 ໃສ່ກະດານ. ອະທິບາຍວ່າ ອັນນີ້ແມ່ນຄຳຂວັນຂອງທ່ານ ເຈມ ໂປກໃນການເລືອກຕັ້ງປະທານາທິບໍດີປີ 1844. ຊາຍແດນພາກເໜືອຂອງຣັດອໍເຣກອນ ຢູ່ເສັ້ນຂນານ 54.40; ຄຳຂວັນຂອງທ່ານໂປກນີ້ມີຄວາມໝາຍວ່າໃຫ້ຊາວອະເມຣິກັນຕໍ່ສູ້ອັງກິດເຣື່ອງພົມແດນທີ່ຄັດແຍ່ງກັນ. ພົມແດນບາງແຫ່ງອາດຈະບໍ່ຄຸ້ມຄ່າທີ່ຈະຕໍ່ສູ້ກັນ, ແຕ່ສຳລັບໂຢຮັນການວັດແທກພົມແດນຂອງຕົວເອງເປັນເຣື່ອງຈຳເປັນ. ອ່ານ ພຣະນິມິດ 11: 1-2. ໃຊ້ບົດຮຽນຊ່ວຍອະທິບາຍວ່າເປັນຫຍັງໂຢຮັນຈຶ່ງແທກວິຫານ ແລະວ່າມັນມີສ່ວນຫຍັງກັບໄພ່ພົນຂອງພຣະເຈົ້າ. ແນະນຳຄວາມສຳຄັນຂອງການປົກປ້ອງຮັກສາຂອງພຣະເຈົ້າ ແລະຄວາມຮັບຜິດຊອບຂອງພວກເຮົາໃນການນຳຄົນທັງຫລາຍໃຫ້ເຂົ້າມາຢູ່ໃນພົມແດນ.

5. ຖາມ: ທ່ານເຄີຍຖືກໂຈມຕີໃນເວລາທີ່ເຮັດສິ່ງທີ່ຖືກຕ້ອງບໍ່? ທ່ານຮູ້ສຶກຢ່າງໃດ? ໃຫ້ເວລາຜູ້ເຄີຍມີປະສົບການແບ່ງປັນ. ບອກວ່າ: ນັບວ່າເປັນເຣື່ອງໜ້າທໍ້ໃຈ ເມື່ອຖືກໂຈມຕີເພາະເຮັດສິ່ງທີ່ຖືກຕ້ອງ. ໃຫ້ຜູ້ນຶ່ງອ່ານ ພນມ 11: 3-5 ແລ້ວອະທິບາຍ. ບອກໃຫ້ຮູ້ເຣື່ອງພຣະເຈົ້າຊົງປົກປ້ອງຮັກສາພຍານຂອງພຣະອົງ ແລະການຊົງລົງໂທດຜູ້ທີ່ຂົ່ມເຫງພວກເຂົາ. ຢ້ຳ: ພຍານທີ່ສັດຊື່ຈະບໍ່ລົດລະໃນການປະກາດເຖິງວ່າຈະຖືກຕໍ່ສູ້ ແລະປະຕິເສດ. ໜູນໃຈນັກຮຽນໃຫ້ອົດທົນເມື່ອມີໂອກາດເປັນພຍານ.

## <u>**ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)**</u>

6. ຢາຍເຈັ້ງ 4 ຄຸນ 6 ແລະສໍໃຫ້ນັກຮຽນ. ໃຫ້ແຕ່ລະຄົນສລຸບຈຸດສຳຄັນຂອງບົດຮຽນມື້ນີ້ ບໍ່ໃຫ້ກາຍນຶ່ງແຖວ. ຫລັງຈາກ 5 ນາທີໃຫ້ໂອກາດນັກຮຽນແບ່ງປັນສິ່ງທີ່ເຂົາເຈົ້າໄດ້ຂຽນໄວ້. ເນັ້ນເຣື່ອງພຣະເຈົ້າຊົງທຳງານຖ້າມກາງໄພ່ພົນຂອງພຣະອົງ ແລະພຣະອົງຊົງໃຫ້ພຣະພອນແກ່ຜູ້ສັດຊື່ໃນການປະກາດເຣື່ອງຄວາມພົ້ນທີ່ພຣະອົງຊົງປະທານ. ຄວາມຢ້ານອາດຈະມີໃນເວລາປະກາດ ແຕ່ພຣະເຈົ້າຈະຊົງຊ່ວຍຜູ້ທີ່ສັດຊື່ໃຫ້ເອົາຊະນະຄວາມຢ້ານນັ້ນ.

7. ຖ້າເວລາພໍໃຫ້ຕອບຄຳຖາມໃນພາກສຸດທ້າຍຂອງບົດຮຽນ. ໜູນໃຈທຸກຄົນໃຫ້ມີໃຈກ້າ ແລະສັດຊື່ໃນການເປັນພຍານເຣື່ອງພຣະຄຣິດ. ອ້ອນວອນປິດ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 8

# <u>ພວກຜູ້ເຊື່ອ ຕໍ່ສູ້ພະຍານາກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພຣະນິມິດ 12: 1-6, 13-17; 13: 1-4, 11-18

**<u>ພູມຫລັງຂອງພຣະຄັມພີ</u>**: ພຣະນິມິດ 12---13

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>**: ໃນຂະນະທີ່ຄຣິສຕຽນຕໍ່ສູ້ກັບອຳນາດຊົ່ວ, ພວກເຮົາຈະຕ້ອງອົດທົນໃນຄວາມເຊື່ອ ເພາະພວກເຮົາໝັ້ນໃຈໃນໄຊຊະນະຂອງພຣະເຈົ້າ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ອຳນາດຊົ່ວແນວໃດແດ່ທີ່ກຳລັງຕໍ່ສູ້ພັນທະກິດຂອງພຣະເຈົ້າໃນປັດຈຸບັນນີ້?

**<u>ຈຸດປະສົງຂອງການສຶກສານີ້</u>**: ເພື່ອອະທິບາຍການກະທຳຂອງອຳນາດຊົ່ວໃນບົດຮຽນນີ້ ແລະເພື່ອຈະຮູ້ວ່າຈະຕ້ອງຕໍ່ຕ້ານແນວໃດໃນສມັຍຂອງໂຢຮັນ ແລະສມັຍຂອງພວກເຮົາ.

**<u>ອ່ານລວບ</u>**: ພຣະເຈົ້າໄດ້ຊົງຂັບໄລ່ຊາຕານ, ຊຶ່ງມີພະຍານາກໃຫຍ່ສີແດງທີ່ມີເຈັດຫົວ ສິບເຂົາ, ເປັນຕົວແທນ ອອກຈາກສວັນ. ການຕໍ່ສູ້ລະຫວ່າງພຣະເຈົ້າ ແລະຄວາມຊົ່ວຊຶ່ງເລີ້ມໃນຕອນນັ້ນ ຍັງສືບຕໍ່ມາເຖິງທຸກມື້ນີ້.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຕັ້ງໂຕະນ້ອຍໄວ້ເບື້ອງໜ້າຂອງຫ້ອງຮຽນ ແລ້ວເອົາທະຫານຢາງທີ່ເດັກນ້ອຍຫລິ້ນມາຕັ້ງໄວ້; ຖ້າເປັນໄປໄດ້ໃຫ້ຊອກທະຫານຢາງຫລາຍໆໂຕ ແລະຫລາຍສີ. ຫລັງຈາກນັກຮຽນມາເຖິງ, ໃຫ້ຕັ້ງທະຫານຢາງໄວ້ໃນທ່າຕໍ່ສູ້ກັນ. ຊັກຊວນນັກຮຽນໃຫ້ຄິດເຖິງຍຸດທະວິທີເພື່ອໃຫ້ທະຫານພວກນັ້ນຕໍ່ສູ້ກັນ.
2. ຖ້າມີນັກຮຽນທີ່ເປັນນັກຮົບເກົ່າ ໃຫ້ຕຽມລາວໄວ້ລ່ວງໜ້າ ເພື່ອຈະຖາມຄຳຖາມຕໍ່ໄປນີ້ (ທ່ານສາມາດເຊີນນັກຮົບເກົ່າມາເປັນແຂກກໍໄດ້):
   - ທ່ານເຄີຍຮັບໃຊ້ຢູ່ໃສ ແລະດົນປານໃດ?
   - ເປັນຫຍັງພວກເຮົາຈຶ່ງເຮັດສົງຄາມ?
   - ສົງຄາມທີ່ສົມຄວນມີບໍ່?
   - ພວກເຮົາເສັງ ຫລືຊະນະສົງຄາມວິທີໃດ?
   - ມີຫຍັງແດ່ທີ່ເປັນເຣື່ອງຍາກກ່ຽວກັບສົງຄາມ?
3. ຖາມ: ສຳລັບຄຣິສຕຽນ, ສັດຕຣູພວກເຮົາແມ່ນໃຜ? ໃຊ້ ເອເຟໂຊ 6: 12 ຊ່ວຍ. ເວົ້າວ່າ: ພວກເຮົາຢູ່ໃນສົງຄາມລະຫວ່າງພຣະເຈົ້າ ແລະຊາຕານ, ແຕ່ການສູ້ສົງຄາມຈະຈົບລົງ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

4. ພານັກຮຽນເປີດ ພຣະນິມິດ 12. ແນະນຳເປົ້າໝາຍຂອງໂຢຮັນໃນການຂຽນປຶ້ມພຣະນິມິດ ວ່າທ່ານມີເຈຕນາທີ່ຈະໜຸນໃຈຜູ້ອ່ານໃນສັຕວັດທີນຶ່ງທີ່ກຳລັງຖືກຂົ່ມເຫງເພາະຄວາມເຊື່ອ.

5. ອ່ານ ພນມ 12: 1-6 ໃຫ້ທຸກຄົນໄດ້ຍິນ; ເວົ້າວ່າ: ພຣະທັມນີ້ເວົ້າເຖິງກຳລັງສອງຝ່າຍທີ່ຕໍ່ສູ້ກັນ: ກຳລັງດີ (ພຣະເຈົ້າ) ແລະກຳລັງຊົ່ວ (ຊາຕານ).

ກ່ອນການຮຽນ, ເອົາເທັບສີຕິດໃສ່ພື້ນເພື່ອແບ່ງນັກຮຽນໃຫ້ເປັນສອງຝ່າຍ. ເວົ້າວ່າ: ເສັ້ນໄດ້ຖືກຂີດແລ້ວ, ແລະແຕ່ລະຝ່າຍໃຫ້ໃຊ້ ຈຸດສຳຄັນສຳລັບບົດຮຽນ ແລະພູມຫລັງຂອງພຣະຄັມພີ: ພຣະນິມິດ 12-13. ໃຫ້ແຕ່ລະທີມຕຽມໂປສເຕີ້ແລະສໍສີ (markers) ແນະນຳໃຫ້ຄົນໃນທີມປຶກສາກັນ, ບັນທຶກໄວ້, ແລະຂຽນໃສ່ໂປສເຕີ້ ຈາກເຣື່ອງດັ່ງຕໍ່ໄປນີ້.

- ທີມນຶ່ງ: ຮູບຮ່າງລັກສະນະຂອງພຣະເຢຊູ, ທີມຂອງພຣະເຢຊູ, ແຜນຮົບຂອງພຣະເຢຊູ
- ທີມສອງ: ຮູບຮ່າງລັກສະນະຂອງຊາຕານ, ທີມຂອງຊາຕານ, ແຜນຮົບຂອງຊາຕານ

(ຖ້າມີນັກຮຽນຫລາຍໃຫ້ແບ່ງເປັນຫລາຍໆທີມ, ຖ້ານັກຮຽນໜ້ອຍໃຫ້ເຮັດທີມດຽວ)

6. ກ່ອນການຮຽນ, ຕຽມນັກຮຽນຜູ້ນຶ່ງໃຫ້ເປັນນັກຂ່າວສນາມເພື່ອລາຍງາຍສະພາບການ; ໃຫ້ນັກຂ່າວສຳພາດໂຄສົກຂອງແຕ່ລະທີມ ກ່ຽວກັບຍຸດທະວິທີຂອງເຂົາເຈົ້າ.
7. ຖ້າບໍ່ຢາກໃຫ້ມີນັກຂ່າວ, ໃຫ້ທ່ານເປັນຄົນເລົ່າເຫດການແລະແນະນຳຂໍ້ພຣະຄຳສຳລັບສິ່ງຕໍ່ໄປນີ້:

| | |
|---|---|
| - ຊາຕານເປັນ______________ | - ພຣະເຢຊູຊົງເປັນ________________ |
| - ຊາຕານຕ້ອງການ___________ | - ພຣະເຢຊູຊົງຕ້ອງການ_____________ |
| - ຊາຕານໃຊ້______________ | - ພຣະເຢຊູຊົງໃຊ້_________________ |

8. ເວົ້າວ່າ: ຮູບພາບຂອງຊາຕານສາມຢ່າງໃນພຣະຄຳນີ້: ພະຍານາກ, ສັດຮ້າຍຈາກທະເລ, ແລະສັດຮ້າຍຈາກພື້ນດິນ. ຊີ້ໃຫ້ເຫັນຮູບຮ່າງ, ໜ້າທີ່, ແລະຕົວເລກຂອງສັດຮ້າຍ (ພນມ 13: 11-18). ອ່ານ ພນມ 13: 14 ໃຫ້ທຸກຄົນໄດ້ຍິນ.
9. ເວົ້າວ່າ: ພວກເຮົາບໍ່ຄວນດຳເນີນຊີວິດໃນຄວາມຢ້ານ ແຕ່ພວກເຮົາຕ້ອງເບິ່ງແຜນການໂຈມຕີຂອງຊາຕານ. ຖາມ: ມີຫຍັງແດ່ທີ່ເກີດຂຶ້ນໃນສັງຄົມທີ່ທ່ານຄິດວ່າຊາຕານກຳລັງຢູ່ເບື້ອງຫລັງ? ຖາມ: ໃນທີ່ສຸດໃຜຈະເປັນຜູ້ຊະນະ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ຖາມນັກຮຽນເທື່ອລະຄົນ ໂດຍໃຊ້ຄຳຖາມຕໍ່ໄປນີ້:
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍການອ້ອນວອນວິທີໃດ?
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍພຣະຄຳວິທີໃດ?
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍການດຳເນີນຊີວິດຢ່າງຖືກຕ້ອງວິທີໃດ?
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍຄວາມເມດຕາວິທີໃດ?
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍການແບ່ງປັນຂ່າວປະເສີດວິທີໃດ?
    - ພວກເຮົາຈະຕໍ່ສູ້ຄວາມຊົ່ວດ້ວຍການເປັນອັນນຶ່ງອັນດຽວກັນວິທີໃດ?
11. ປິດການສຶກສາພຣະຄຳດ້ວຍການອ້ອນວອນ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ກຳລັງຂອງຄວາມຊົ່ວຖືກຕັດສິນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ 14: 1-13

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ 14

**ຈຸດສຳຄັນສຳລັບບົດຮຽນນີ້**: ໄພ່ພົນຂອງພຣະເຈົ້າສາມາດໝັ້ນໃຈໄດ້ວ່າພຣະເຈົ້າຈະຊົງຕັດສິນພວກຜູ້ຕໍ່ສູ້ຢ່າງຮ້າຍແຮງ.

**ຄຳຖາມເພື່ອຄົ້ນຄວ້າ**: ການຕິດຕາມພຣະເຈົ້າຄຸ້ມຄ່າບໍ່?

**ຈຸດປະສົງຂອງການສຶກສານີ້**: ເພື່ອເບິ່ງຄວາມໝາຍຂອງຄຳສອນໃນພຣະຄຳຕອນນີ້ ກ່ຽວກັບການຕັດສິນຂອງພຣະເຈົ້າ.

**ອ່ານລວບ**: ໂຢຮັນໜູນໃຈຜູ້ອ່ານດ້ວຍຄວາມຈິງວ່າການຕໍ່ສູ້ອາດຈະຮ້າຍແຮງ ຫລືເຖິງຂັ້ນຕາຍ ແຕ່ພຣະເຈົ້າຈະຊົງທຳລາຍທຸກໆກຳລັງທີ່ຕໍ່ສູ້ພວກເຂົາ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ນຳເອົາເຄື່ອງນຸ່ງ ແລະຂອງໃຊ້ໃນບ້ານມາຍອງໄວ້ໜ້າໂຕະ ແລ້ວຂຽນປ້າຍໃສ່ວ່າ "ຂາຍເລ." ຕຽມປ້າຍຣາຄາໄວ້ ແລ້ວຖາມນັກຮຽນວ່າ ຂອງແຕ່ລະຢ່າງຄວນໃສ່ຣາຄາຫລາຍເທົ່າໃດ. ໃຫ້ໝົດທຸກຄົນເຫັນພ້ອມກ່ອນທີ່ຈະຂຽນຣາຄາໃສ່ແຕ່ລະຢ່າງ (ຖ້າມີນັກຮຽນຫລາຍຄົນ ໃຫ້ແຕ່ງຕັ້ງສາມ ຫລືສີ່ຄົນໃຫ້ເປັນຜູ້ຕິດຣາຄາສິ່ງຂອງ).
2. ຫລັງຈາກຕິດຣາຄາສິ່ງຂອງຮຽບຮ້ອຍແລ້ວໃຫ້ຖາມດັ່ງຕໍ່ໄປນີ້:
    - ພວກເຮົາຄິດຣາຄາສິ່ງຂອງວິທີໃດ?
    - ເປັນຫຍັງສິ່ງຂອງແຕ່ລະຢ່າງມີຣາຄາບໍ່ເທົ່າກັນ?
    - ທ່ານເຫັນພ້ອມກັບຣາຄາໝົດທຸກຢ່າງບໍ່? ເປັນຫຍັງເຫັນພ້ອມ? ເປັນຫຍັງບໍ່ເຫັນພ້ອມ?
    - ສິ່ງຂອງອັນໃດທີ່ຈະຂາຍໄດ້ໄວກວ່າສິ່ງອື່ນໆ?
3. ເວົ້າວ່າ. ການຄິດຣາຄາສິ່ງຂອງມີຫລາຍສ່ວນປະກອບເຊັ່ນ: ຣາຄາອຸປກອນ, ຈຳນວນສິ່ງຂອງ, ແລະຄວາມຕ້ອງການຂອງບຸກຄົນ. ຖາມ: ການຕິດຕາມພຣະຄຣິດມີຣາຄາແພງບໍ່? ເວົ້າວ່າ, ບົດຮຽນມື້ນີ້ຈະເວົ້າເຖິງເຣື່ອງທີ່ວ່າ: ການຕິດຕາມພຣະເຈົ້າຄຸ້ມຄ່າບໍ່?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

4. ອ່ານ ພຣະນິມິດ 14: 1-5. ໂຢຮັນໃຊ້ເລື່ອງຄົນ 144,000 ຄົນເພື່ອໜູນໃຈຜູ້ເຊື່ອ; ໃຫ້ໂອກາດນັກຮຽນແນະນຳລັກສະນະຂອງພວກ 144,000 ຄົນ ແລ້ວໃຫ້ເບິ່ງຄວາມແຕກຕ່າງຈາກພວກທີ່ຕິດຕາມຜູ້ຊົ່ວຮ້າຍໃນພຣະນິມິດ 13.
5. ເວົ້າວ່າ, ໃນຂໍ້ 6, ໂຢຮັນໄດ້ປ່ຽນຈາກພວກຜູ້ເຊື່ອ ໄປເວົ້າເລື່ອງຜູ້ບໍ່ເຊື່ອໃນໂລກ. ໃຫ້ຜູ້ນຶ່ງອ່ານ 14: 6-8; ໃຫ້ທຸກຄົນຄິດເຖິງຄວາມໝາຍຂອງ "ຂ່າວປະເສີດອັນນິຣັນດອນ." ຖາມ: ພຣະຄຳຕອນນີ້ອະທິບາຍຂ່າວປະເສີດອັນນິຣັນດອນວິທີໃດ? ໃຫ້ຜູ້ນຶ່ງອ່ານ ຢາໂກໂບ 4: 1-4; ແລະໃຫ້ພິຈາຣະນາເບິ່ງຂໍ້ 4: ການເປັນມິດຕໍ່ໂລກ ກໍຄືການເປັນສັດຕູຕໍ່ພຣະເຈົ້າ. ໃຊ້ເວລາໃຫ້ຄວາມເຫັນວ່າພຣະນິມິດ 14 ສະແດງໃຫ້ຮູ້ວິທີໃດກັບການເປັນມິດຕໍ່ໂລກ.
6. ໃຫ້ທຸກຄົນອ່ານ ພນມ 14: 9-13 ສຳລັບຕົນເອງ; ອ່ານ ຂໍ້ 12 ໃຫ້ທຸກຄົນໄດ້ຍິນ; ພຣະຄຳນີ້ເປັນຄຳສອນສຳລັບໄພ່ພົນຂອງພຣະເຈົ້າໃນຂະນະທີ່ລໍຄອຍວັນສຸດທ້າຍ. ໃຫ້ຜູ້ນຶ່ງອ່ານ 14: 6-11; ຫລັງຈາກອ່ານຈົບໄດ້ທຸກຄົນຕອບວ່າ: ຜູ້ເຊື່ອຕ້ອງອົດທົນ, ຮັກສາພຣະບັນຊາ, ແລະສັດຊື່ຕໍ່ພຣະເຢຊູ.
7. ພວກເຮົາເຄີຍໄດ້ຍິນວ່າການແກ້ແຄ້ນເປັນຂອງພຣະເຈົ້າ (ໂຣມ 12: 19). ພານັກຮຽນໃຫ້ເບິ່ງພຣະຄຳຕໍ່ໄປວ່າຈະກ່ຽວຂ້ອງຢ່າງໃດກັບການສະແດງຂອງເທວະດາຕົນທີສອງແລະສາມໃນ ພຣະນິມິດ 14; 1 ຊາມູເອນ 24: 12; ມັດທາຍ 25: 41; ເພງສັຣເສີນ 49:15; 2 ເທຊະໂລນິກາ 1:6-9 ເພງສັຣເສີນ 94: 1; ເຮັບເຣີ 10: 30; ເອເຊກຽນ 25: 17; ພຣະນິມິດ 21: 8
8. ເຕືອນນັກຮຽນວ່າ:ເນື່ອງຈາກພວກເຮົາເຊື່ອພຣະເຈົ້າເລື່ອງຄວາມໝັ້ນຄົງຂອງເຮົາ, ການເປັນຢູ່ຂອງພວກເຮົາໃນຄາວສຸດທ້າຍແມ່ນຢູ່ທີ່ຄວາມສັມພັນຂອງເຮົາກັບພຣະອົງ (ຢຮ 10: 10), ເຖິງພວກເຮົາຈະບໍ່ເຂົ້າໃຈໝົດທຸກຢ່າງໃນສິ່ງທີ່ໂຢຮັນໄດ້ບັນທຶກໄວ້ໃນພຣະທັມພຣະນິມິດ.

## **ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)**

9. ອ່ານ ພຣະນິມິດ 14: 12 ອີກເທື່ອນຶ່ງ; ແນະນຳທຸກຄົນໃຫ້ທ່ອງຂຶ້ນໃຈພຣະຄຳຂໍ້ນີ້ ພາຍໃນອາທິດນີ້.
10. ແຍກນັກຮຽນເປັນກຸ່ມນ້ອຍ ແລ້ວໃຫ້ແຕ່ລະກຸ່ມຕອບຄຳຖາມໃນພາກສຸດທ້າຍຂອງບົດຮຽນ.
11. ຫລັງຈາກນັ້ນ ກັບມາເວົ້າເລື່ອງສິ່ງຂອງ "ຂາຍເລ" ອີກເທື່ອນຶ່ງ.
    - ມີຫຍັງແດ່ໃນຊີວິດທີ່ບໍ່ສາມາດຄິດຣາຄາໃສ່ໄດ້? (ຄວາມສັມພັນກັບພຣະເຈົ້າ, ແລະຕໍ່ໆໄປ)
    - ການຮູ້ຈັກ ຊ່ວຍໃຫ້ມີຄວາມອົບອຸ່ນວິທີໃດ?
    - ພວກເຮົາຈະສາມາດສູ້ທົນຕໍ່ຄວາມລຳບາກຊົ່ວຄາວໄດ້ບໍ່ ເມື່ອເຮົາຮູ້ວ່າພຣະເຈົ້າຈະຊົງຕັດສິນຄວາມຊົ່ວໃນທີ່ສຸດ?
    - ທ່ານຄິດວ່າການຕັດສິນປະເພດໃດຮ້າຍແຮງທີ່ສຸດ?
12. ອ້ອນວອນປິດ; ຂອບພຣະຄຸນພຣະເຈົ້າທີ່ພຣະອົງຍັງຊົງຄວບຄຸມທຸກຢ່າງ ແລະຜູ້ເຊື່ອສາມາດເຊື່ອວາງໃຈໃນພຣະອົງເລື່ອງອະນາຄົດ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# <u>ເພງແຫ່ງຊັຍຊະນະ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພຣະນິມິດ 15--16

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 15--16

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຊົງເປັນທຸກ ເພື່ອໃຫ້ມະນຸດເປັນສຸກ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ແຜນການພຣະເຈົ້າລົ້ມເຫລວບໍ່?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອເຂົ້າໃຈຄວາມໝາຍຂອງເຈັດ

## <u>ບົດນຳ</u>

ບັນທຶກການເຫັນນິມິດຂອງອັຄສາວົກໂຢຮັນເຣື່ອງພັຍອັນຕະລາຍເຈັດຢ່າງທີ່ຈະເກີດຂຶ້ນໃນຄາວສຸດທ້າຍ ແລະຈະເກີດມີແທ້ໆໂດຍບໍ່ມີໃຜຫ້າມໄວ້ໄດ້. ເພື່ອຄວາມເຂົ້າໃຈໃນສິ່ງເຫລົ່ານີ້ໃຫ້ຄຶດເຖິງສິ່ງທີ່ເກີດຂຶ້ນໃນສມັຍໂມເຊນຳອິສຣາເອນອອກຈາກການເປັນຂ້າທາດ ມີສິ່ງໃດເກີດຂຶ້ນກັບເອຢິບແດ່.

## <u>ພັຍເຈັດຢ່າງໂດຍເທວະດາເຈັດອົງ</u> (ພຣະນິມິດ 15:1-8)

1. ຄຣູອະທິບາຍ ດັ່ງນີ້; ເຮົາເຄີຍໄດ້ຍິນ ແລະໄດ້ເຫັນຮູບເງົາທີ່ເວົ້າເຣື່ອງ Apocalyptic ຊຶ່ງເປັນພາສາກຣີກ ມີຄວາມໝາຍວ່າ Revelation ທີ່ພາສາລາວແປວ່າ (ພຣະນິມິດ) ທີ່ມີຄວາມໝາຍວ່າ ພຣະເຈົ້ານິມິດໃຫ້ເຫັນເຫດການລ່ວງໜ້າເຣື່ອງຄາວສຸດທ້າຍຂອງໂລກ.

2. ພຣະເຈົ້າຊົງອະນຸຍາດໃຫ້ອັຄສາວົກໂຢຮັນເຫັນເຫດການທີ່ຈະເກີດຂຶ້ນໃນອະນາຄົດ ເພື່ອຈະໄດ້ບັນທຶກແລະເພື່ອຕັກເຕືອນໃຫ້ຄົນທັງຫລາຍມີໂອກາດຖິ້ມໃຈເກົ່າເອົາໃຈໃໝ່, ແລະເພື່ອຕັກເຕືອນໃຫ້ຜູ້ທີ່ເຊື່ອແລ້ວບໍ່ໃຫ້ຫລົງລືມທາງແຫ່ງຄວາມເຊື່ອຂອງເຂົາ.

3. ໂຢຮັນເຫັນເທວະດາເຈັດຕົນເຮັດໜ້າທີ່ເຈັດຢ່າງຕາມພຣະບັນຊາຂອງອົງພຣະຜູ້ເປັນເຈົ້າ, ແລະເທວະດາທັງເຈັດໄດ້ຮ້ອງເພງສັຣເສີນພຣະເຈົ້າ (ເນື້ອເພງຢູ່ໃນຂໍ້ 3-4).

4. ເມື່ອສິ້ນສຸດຮ້ອງເພງແຫ່ງຊັຍຊະນະແລ້ວພຣະເຈົ້າກໍຊົງສະຖິດໃນພຣະວິຫານ ແລະພຣະວິຫານກໍເຕັມໄປດ້ວຍຄວັນ ຊຶ່ງສະແດງເຖິງຣິດອຳນາດຂອງພຣະອົງ ຊຶ່ງບອກວ່າພຣະອົງຊົງສະຖິດເທິງບັນລັງພິພາກສາ.

## <u>**ຂັນແຫ່ງພຣະພິໂຣດ**</u> (ພຣະນິມິດ 16:1-11)

1. ຂັນຫລືວ່າຂັນທັງເຈັດທີ່ເຕັມໄປດ້ວຍພຣະພິໂຣດ (ໃຈຮ້າຍຢ່າງສຸດຂີດ) ຂອງພຣະເຈົ້າ. ຈະມີເທວະດາເຈັດອົງຈະເຮັດໜ້າທີ່ຄົນລະຢ່າງ.

2. ຄຳວ່າຂັນເປັນຮູບຈອກຍາວແລະເລິກໃນສມັຍບູຮານໃຊ້ໃນການດື່ມ ດັ່ງທີ່ເຮົາເຄີຍເຫັນໃນຮູບເງົາທີ່ຄົນໃນພຣະຣາຊວັງໃຊ້ກັນ, ເທວະດາທັງເຈັດໄດ້ເຮັດດັ່ງນີ້;

*ກ. ເທວະດາຕົນແຣກຈຶ່ງອອກໄປເອົາຂັນຂອງຕົນຖອກລົງເທິງ<u>ແຜ່ນດິນໂລກ</u>" ແລະຄົນທັງຫລາຍທີ່ມີເຄື່ອງຫມາຍຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນຝີຮ້າຍແຮງແລະເຈັບປວດ* (ຂໍ້ 2). ແປວ່າຄົນທັງຫລາຍທີ່ມີບາບ, ບໍ່ຍອມເຊື່ອໃນຂ່າວປະເສີດ, ຜູ້ຕໍ່ສູ້ພຣະຄຣິດ, ຜູ້ກົດຂີ່ຂົ່ມເຫັງຄຣິສຕຽນຈະເປັນດັ່ງຂໍ້ 2

*ຂ. ເທວະດາຕົນທີສອງໄດ້ຖອກຂັນຂອງຕົນລົງໃສ່<u>ທະເລ</u> ແລ້ວນ້ຳທະເລກໍກາຍເປັນເລືອດເຫມືອນເລືອດຂອງຄົນຕາຍ ແລະບັນດາສິ່ງທີ່ມີຊີວິດຢູ່ນັ້ນກໍຕາຍຫມົດ* (ຂໍ້ 3).

*ຄ. ເທວະດາຕົນທີສາມໄດ້ຖອກຂັນຂອງຕົນລົງໃສ່<u>ແມ່ນ້ຳແລະນ້ຳພຸທັງຫລາຍ</u> ນ້ຳເຫລົ່ານັ້ນກໍກາຍເປັນເລືອດ* (ຂໍ້ 4).

*ງ. ເທວະດາຕົນທີສີ່ໄດ້ຖອກຂັນຂອງຕົນລົງໃສ່ດວງ<u>ອາທິດ</u> ດວງອາທິດຈຶ່ງໄດ້ຮັບພຣະຣາຊທານອຳນາດລວກມະນຸດດ້ວຍໄຟ* (ຂໍ້ 8).

*ຈ. ເທວະດາຕົນທີຫ້າໄດ້ຖອກຂັນຂອງຕົນລົງໃສ່ບັນລັງຂອງສັດຮ້າຍ ແລະ<u>ອານາຈັກຂອງມັນກໍມືດ</u>ໄປ ຄົນເຫລົ່ານັ້ນໄດ້ຂົບຄຽວລີ້ນຂອງຕົນດ້ວຍຄວາມເຈັບປວດ* (ຂໍ້ 10).

## <u>**ສອງຂັນສຸດທ້າຍ**</u> (ພຣະນິມິດ 16:12-21)

ສ. . *ເທວະດາຕົນທີຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳໃຫຍ່ ຄືແມ່<u>ນ້ຳເອິຟຣາດ</u> ນ້ຳໃນແມ່ນ້ຳນັ້ນຈຶ່ງແຫ້ງໄປ ເພື່ອຈັດແຈງທາງໄວ້ສຳລັບກະສັດທັງຫລາຍທີ່ມາຈາກທິດຕາເວັນອອກ* (ຂໍ້ 12). ແມ່ນນ້ຳເອິຟຣາດຈະແຫ້ງຂອດແລ້ວບັນດາກະສັດຝ່າຍໂລກຈະອອກມາສູ້ຮົບທີ່ພູເຂົາ ແມກກິໂດ ພາກເໜືອຂອງອິສຣາເອນ ແລະຍຶດຄອງແຜ່ນດິນສັກສິດ. ຄຳວ່າແມກກິໂດ ແປວ່າ ບ່ອນພວກທະຫານຖືກຂ້າຕາຍ (ອ່ານ ຂໍ້ 13-14).

ຊ. *ເທວະດາຕົນທີເຈັດໄດ້ຖອກຂັນຂອງຕົນລົງໃສ່<u>ອາກາດ</u> ແລະມີພຣະສຸຣະສຽງດັງອອກມາຈາກພຣະຣາຊບັນລັງໃນພຣະວິຫານນັ້ນວ່າ, "ສຳເຣັດແລ້ວ"* (ຂໍ້ 17). ໃນພຣະທັມເອເຟໂຊ 2:2 ໄດ້ກ່າວເຖິງເຈົ້ານາຍແຫ່ງຍ່ານອາກາດ ແມ່ນວິນຍານຊົ່ວທີ່ຄອບຄອງຄົນທັງຫລາຍບໍ່ໃຫ້ເຊື່ອພຣະເຈົ້າ ດ້ວຍເຫດນີ້ແຫລະພຣະເຈົ້າຈຶ່ງໃຫ້ເທວະດາເທຂັນແຫ່ງພຣະພິໂຣດໃສ່ອາກາດເພື່ອທຳລາຍພວກມັນ.

*ຫວ*

**ຄຳແນະນຳສຳລັບຄຣູສອນ**

**ບົດຮຽນທີ 11**

**ກຸງບາບີໂລນຫລົ້ມຈົມ**

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພຣະນິມິດ 17:1-6; 18:1-8

**ພູມຫລັງຂອງພຣະຄັມພີ:** ພຣະນິມິດ 17--19:5

**ຈຸດສຳຄັນຂອງບົດຮຽນນີ້:** ໃຊ້ຄວາມຮັ່ງມີບໍ່ຖືກຕ້ອງຈະຕ້ອງຖືກລົງໂທດ

**ຄຳຖາມເພື່ອການຄົ້ນຄວ້າ:** ອຳນາດແລະຄວາມຮັ່ງມີ ແນວໃດທີ່ເຮົາຈະຮຽນຮູ້?

**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະບໍ່ຫລົ້ມຈົມດັ່ງບາບີໂລນ.

## ບົດນຳ

ຄຣູຈະຕ້ອງອ່ານພຣະນິມິດ 17 ເຖິງ 18:5 ເປັນປະການແຣກ, ຕໍ່ມາອ່ານບົດຮຽນໃຫ້ເຂົ້າໃຈ ແລະໃນທີ່ສຸດຈະຕ້ອງເອົາບົດສອນເປັນຫລັກໃນເວລາສອນ, ແລະຢາກແຈ້ງໃຫ້ຊາບອີກວ່າ ບົດຮຽນນີ້ ໄດ້ເຮັດໃຫ້ສັ້ນລົງກວ່າພາສາອັງກິດ ແລະແຕ່ພາກສ່ວນຕ່າງໆ ສອດຄ່ອງກັນກັບພາສາອັງກິດ.

## ຜູ້ທຸດຈະຣິດກຳອຳນາດ (ພຣະນິມິດ 17:1-17)

1. ໂຢຮັນກ່າວວ່າ " ເທວະດາຕົນນຶ່ງໃນເຈັດຕົນທີ່ຖືຂັນທັງເຈັດຫນ່ວຍນັ້ນ " ແປວ່າເທະວະດາກຳລັງຖືຂັນແຫ່ງພຣະພິໂຣດຂອງພຣະເຈົ້າຕຽມຈະຖອກລົງສູ່ແຜ່ນດິນໂລກ.

2. ເທວະດາໄດ້ສຳແດງໃຫ້ໂຢຮັນເຫັນນິມິດການພິພາກສາຈະເກີດຂຶ້ນ ເພື່ອສັ່ງສອນຕັກເຕືອນ ໃຫ້ຄົນທັງຫລາຍພາກັນຢ້ານແລະກັບໃຈໃໝ່.

3. ຍິງໂສເພນີ ນັ່ງຢູ່ເທິງນ້ຳ (ເໜືອນ້ຳ) ນ້ຳອັນໝາຍເຖິງປະຊາກອນຈົນເຖິງຂັ້ນກະສັດໃນໂລກທີ່ຢູ່ໃຕ້ອຳນາດຂອງໂສເພນີ. (ຍິງໂສເພນີໝາຍເຖິງ "ບາບີໂລນ")

4. ຍິງໂສເພນີນັ່ງເທິງຫລັງສັດຮ້າຍ ອ່ານເຣື່ອງສັດຮ້າຍບົດ 13

5. ສັດຮ້າຍນີ້ໝາຍເຖິງ ພວກຜູ້ທຸດຈະຣິດທີ່ກຳອຳນາດຂອງບ້ານເມືອງຂອງກຸງໂຣມ, ກຸງບາບີໂລນ, ຜູ້ກົດຂີ່ຂົ່ມເຫງໄດ້ຂົ່ມເຫງໃຫ້ປະຊາຊົນຂາບໄຫວ້ພຣະທຽມ.

6. ໂຕສັດຮ້າຍທີ່ໂຢຮັນເຫັນນັ້ນມີສິບເຂົາ ແລະມີເຈັດຫົວ ແລະເຂົາທັງເຈັດນັ້ນໝາຍເຖິງກະສັດທັງເຈັດ ຊຶ່ງຫ້າກະສັດນັ້ນໄດ້ລ່ວງໄປແລ້ວ ແລະອີກກະສັດອົງນຶ່ງຍັງຊົງເປັນຢູ່ ສ່ວນກະສັດອີກອົງນຶ່ງນັ້ນຍັງບໍ່ທັນສະເດັດມາ (ເບິ່ງ 17:10).

7. ຫອນສິບອັນນັ້ນໝາຍເຖິງກະສັດທັງສິບທີ່ບໍ່ໄດ້ສເວີຍຣາດ ອ່ານ ຂໍ້ 12-14.

**<u>ໃຫ້ປະຊາຊົນຂອງພຣະເຈົ້າອອກກ່ອນ</u>** (ພຣະນິມິດ 18:1-5)

1. ການກ່າວໂທດຂອງບາບີໂລນ ຂໍ້ 2-3

2. ຊົງຮຽກເອີ້ນ ປ່າວເຕືອນປະຊາຊົນຂອງພຣະເຈົ້າອອກຈາກກຸງບາບີໂລນກ່ອນພຣະເຈົ້າຈະລົງໂທດບາບີໂລນ ຂໍ້ 4

3. ເວົ້າເຖິງພຣະເຢຊູສົ່ງສາວົກອອກໄປທົ່ວໂລກເພື່ອຮຽກເອີ້ນຄົນທັງຫລາຍໃຫ້ອອກຈາກຊີວິດເກົ່ານັ້ນເປັນຮູບພາບຂອງພຣະເຈົ້າຮຽກເອີ້ນປະຊາຊົນຂອງພຣະອົງອອກຈາກບາບີໂລນ

4. ພຣະເຢຊູອ້ອນວອນເພື່ອພວກສາວົກ ອ່ານໂຢຮັນ 17:14-17

**<u>ກຸງບາບີໂລນຖືກພິພາກສາ</u>** (ພຣະນິມິດ 18:6-8)

1. ນະຄອນນັ້ນ ໝາຍເຖິງນະຄອນບາບີໂລນ ຈະຖືກທຳລາຍ.

2. ຄຳວ່າ "ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດກໍຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ" ແປວ່າບາບີໂລນເຮັດຢ່າງໃດກັບຜູ້ອື່ນພຣະເຈົ້າຈະເຮັດຢ່າງນັ້ນຄືນ.

3. ທຸກຢ່າງທີ່ເຂົາເຮັດຕໍ່ຜູ້ອື່ນພຣະເຈົ້າຈະໃຫ້ເຂົາໄດ້ຮັບຄືນສອງເທົ່າ (ອ່ານຂໍ້ 6-8).

4. ກົດຂອງພຣະຄັມພີເດີມ. (ອ່ານພຣະທັມອົພຍົບ 22:7).

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# <u>ການສະເດັດມາຂອງຈອມກະສັດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພຣະນິມິດ 19:11-21; 20:1-20

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 19:6--20:15

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າພຣະເຢຊູຈະປາບຊາຕານຈົນໝົດກົ້ງງ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຣື່ອງປະຫວັດສາດຈະນຳໄປເຖິງບ່ອນໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອໃຫ້ເຮົາເຂົ້າໃຈການປາບຊາຕານ.

## <u>ບົດນຳ</u>

ພັນປີແຣກແມ່ນພຣະເຢຊູສະເດັດມາຕັດສິນ ແລະຊົງປະທັບເທິງຫລັງມ້າຂາວ, ສວມມົງກຸດຫລາຍອັນ ຊຶ່ງມີຝູງທະຫານຄົບຊຸດຕຽມພ້ອມເພື່ອຕຽມສູ້ຮົບກັບມານຊາຕານ, ໃນເວລານັ້ນເທວະດາໄດ້ປະກາດໃຫ້ນົກທົ່ວທ້ອງຟ້າຕຽມອອກມາກິນເນື້ອສັດຮ້າຍ, ມາກິນເນື້ອເຈົ້ານາຍທີ່ຈະຕ້ອງຕາຍໃນສົງຄາມຄັ້ງນີ້. ພວກກະສັດຝ່າຍໂລກໄດ້ເຕົ້າໂຮມກັນເພື່ອຮົບຕໍ່ສູ້ພຣະເຢຊູຜູ້ປະທັບເທິງຫລັງມາຂາວນັ້ນ ແຕ່ພວກເຂົາໄດ້ເສັຽຊັຍໃຫ້ພຣະເຢຊູ ແລະພຣະອົງຊົງຈັບມັດພວກມັນແລ້ວຖິ້ມລົງໄວ້ເຫວເລິກໃນຣະຫວ່າງພັນປີ ແລະເມື່ອຄົບພັນປີແລ້ວພຣະອົງກໍຊົງປ່ອຍພວກມັນອີກເທື່ອນຶ່ງ.

**<u>ຈອມຣາຊາສະເດັດ</u>** (ພຣະນິມິດ 19: 11-16)

ນິມິດທີ່ໂຢຮັນເຫັນໃນຟ້າສວັນຕອນນີ້ມີຫລາຍຢ່າງສຳຄັນໃນພຣະທັມຂໍ້ນີ້ຄື;

1. *ຊົງປະທັບເທິງຫລັງມ້າຂາວ* (ຂໍ້ 11ກ). ອັນນີ້ຄວາມໝາຍວ່າ ພຣະອົງຊົງເຮັດສົງຄາມກັບມານຊາຕານ ແຕ່ເຮັດດ້ວຍຄວາມເປັນທັມ, ຫາກເຮົາປຽບທຽບໃສ່ຕອນພຣະອົງຊົງປະທັບເທິງຫລັງລໍເຂົ້າກຸງເຢຣູຊາເລັມນັ້ນແມ່ນພຣະອົງຊົງສະເດັດດ້ວຍສັນຕິສຸກ. ດັ່ງນັ້ນການປະທັບເທິງຫລັງມ້າແລະເທິງຫລັງລໍຈຶ່ງມີຄວາມໝາຍກົງກັນຂ້າມ.

2. *ພຣະອົງຊົງສັດຊື່* (ຂໍ້ 11ຂ). ອັນໝາຍເຖິງຄຳສັນຍາຂອງພຣະອົງທີ່ມີແກ່ຜູ້ທີ່ເຊື່ອນັ້ນຈະເກີດເປັນຈິງ, ດ້ວຍເຫດນີ້ຜູ້ທີ່ເຊື່ອພຣະອົງກໍດີ, ຜູ້ຮັບໃຊ້ພຣະອົງທີ່ພົບກັບຄວາມຫຍຸ້ງຍາກອັນໃດກໍຕາມ ຈະຕ້ອງເປັນຄົນອົດທົດດົນນານ ແລະເຊື່ອໃນຄຳໝັ້ນສັນຍາຂອງພຣະອົງຢູ່ສເມີ.

3. *ພຣະອົງຊົງທ່ຽງທັມ*(ຂໍ້ 11ຄ).ໝາຍເຖິງການຕັດສິນລົງໂທດ ແລະການໃຫ້ລາງວັນນັ້ນຕາມຄວາມເຊື່ອແລະການປະຕິບັດຂອງທຸກຄົນທີ່ໄດ້ບົວລະບັດຮັບໃຊ້ພຣະອົງໃນທຸກທົ່ນທຸກແຫ່ງ.

4. *ພຣະເນດ* (ດວງຕາ) (ຂໍ້ 12ກ). ຂອງພຣະອົງເປັນເໝືອນແປວໄຟ ອາດຈະມີຄວາມໝາຍວ່າ ຄວາມຍິ່ງໃຫຍ່ສັກສິດຂອງພຣະອົງ ແລະພຣະອົງພ້ອມທີ່ຈະຕັດສິນພິພາກສາລົງໂທດ.

5. *ເທິງພຣະສຽນ* (ຫົວ) (ຂໍ້ 12ຂ). ມີມົງກຸດຫລາຍອັນ ຊຶ່ງໝາຍເຖິງພຣະອົງຊົງເປັນກະສັດເໜືອກະສັດທັງປວງ.

6. *ເສື້ອຄຸມທີ່ພຣະອົງຖືນັ້ນຈຸ່ມດ້ວຍເລືອດ* (ຂໍ້ 13). ໝາຍເຖິງພຣະອົງຊົງຫລັ່ງເລືອດທີ່ໄມ້ກາງແຂນ ເພື່ອຊຳຣະລ້າງຄວາມຜິດບາບຂອງຄົນທັງຫລາຍທີ່ໄມ້ກາງແຂນ.

## <u>**ພຣະເຢຊູປາບຊາຕານ**</u> (ພຣະນິມິດ 19:17--20:6)

1. ເທວະດາຕົນນຶ່ງປະກາດດ້ວຍສຽງດັງໃຫ້ນົກທັງປວງໃນທ້ອງຟ້າມາໂຮມກັນເພື່ອຈະຮ່ວມກັນກິນລ້ຽງໃຫຍ່ຂອງພຣະເຈົ້າ, ງານລ້ຽງນົກຄັ້ງນີ້ພວກນົກຈະໄດ້ກິນ " *ຊີ້ນກະສັດ ຊີ້ນນາຍທະຫານ ຊີ້ນຊາຍສະກັນ ຊີ້ນມ້າແລະຊີ້ນຄົນຂີ່ມ້ານັ້ນ ແລະຊີ້ນປະຊາຊົນ ທັງເສຣີແລະຂ້ອຍຂ້າ ທັງຜູ້ນ້ອຍແລະຜູ້ໃຫຍ່*" ຂໍ້ 18).

2. ກະສັດຂອງແຜ່ນດິນໂລກຮວບຮວມກອງທັບເພື່ອຕໍ່ສູ້ກັບພຣະເຢຊູ ແຕ່ພວກເຂົາຖືກຈັບ ພ້ອມທັງພວກຜູ້ປະກາດພຣະທັມຈອມປອມທີ່ມັກເຮັດໝາຍສຳຄັນເພື່ອຫລອກລວງຄົນທັງຫລາຍກໍຖືກຈັບ, ພວກເຂົາໄດ້ຖືກຖິ້ມລົງໃນບຶງໄຟທີ່ເຜົາໄໝ້ຢູ່ດ້ວຍມາດ ສ່ວນພວກທີ່ບໍ່ຖືກຖິ້ມລົງໃສ່ບຶງໄຟກໍຕາຍຍ້ອນພຣະແສງທີ່ອອກຈາກປາກຂອງພຣະເຢຊູ ແລ້ວບັນດານົກກໍກິນຊີ້ນພວກເຂົາ (ຂໍ້ 19-21).

3. ຊາຕານຖືກກັກຂັງ ດັ່ງທີ່ໂຢຮັນເຫັນນິມິດເຫັນເທວະດາຕົນນຶ່ງລົງມາຈາກສວັນຖືກຸນແຈຂອງເຫວເລິກ ແລະຖືໂສ້ເສັ້ນໃຫຍ່ (20:2-3) ແລ້ວໂຢຮັນກໍເຫັນຄົນທີ່ເຊື່ອພຣະເຈົ້າທີ່ຖືກປະຫານໄດ້ຄືນມາມີຊີວິດໃໝ່ແລະຄຸ້ມຄອງຮ່ວມກັບພຣະເຢຊູຄຣິດ ໃນຊ່ວງເວລາພັນປີທີ່ພວກພຍານາກ ແລະຊາຕານຖືກກັກຂັງໃນເຫວເລິກນັ້ນ. (20:6).

## <u>**ຊາຕານຖືກປ່ອຍຫລັງຈາກພັນປີ**</u> (ພຣະນິມິດ 20:7-10)

1. ຫລັງຈາກພັນປີແລ້ວພຣະເຢຊູຈະປ່ອຍພວກມັນອອກຈາກຄຸກອີກເທື່ອນຶ່ງ ແລະພວກມັນຈະອອກໄປຫລອກລວງບັນດາປະຊາຊາດທຸກມຸມໂລກ (ຂໍ້ 7-8).

2. ພວກມັນຈະເຮັດເສິກສົງຄາມຄັ້ງຍິ່ງໃຫຍ່ ຕໍ່ສູ້ກັບຄົນຂອງພຣະເຈົ້າ ແລະນະຄອນຂອງພຣະເຈົ້າຄືກຸງເຢຣູຊາເລັມ ແຕ່ພຣະອົງໄດ້ເຮັດໄຟຕົກລົງຈາກຟ້າສວັນໄໝ້ເຜົາຜານຄົນທັງຫລາຍ ສ່ວນພຍາມານກໍຈະຖືກກຳຈັດໃຫ້ໄປຢູ່ບຶງໄຟນະຮົກ ແລະເຂົາຈະຮ້ອງໄຫ້ທົນທຸກທັງກາງເວັນແລະກາງຄືນ (ຂໍ້ 10).

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# <u>ທ້ອງຟ້າໃໝ່ແລະແຜ່ນດິນໃໝ່</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພຣະນິມິດ 21:1-8; 22:1-7, 16-17

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 21--22

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຈະຊົງບັນດານໃຫ້ທຸກຢ່າງເປັນອັນໃໝ່.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທຸກຢ່າງຈະເປັນຂອງໃໝ່ໄດ້ແນວໃດ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອໃຫ້ເຮົາຕັ້ງຄວາມຫວັງຕໍ່ທ້ອງຟ້າໃໝ່ແລະແຜ່ນດິນໃໝ່

## <u>ບົດນຳ</u>

ຫລັງຈາກມານຊາຕານຖືກຈັບຖິ້ມລົງເຫວເລິກ (ໝົ້ນະຮົກ) ນັ້ນພຣະເຈົ້າໄດ້ຊົງສ້າງເຢຣູຊາເລັມໃໝ່, ທ້ອງຟ້າໃໝ່ແລະແຜ່ນດິນໃໝ່, ໃນແຜ່ນດິນໃໝ່ນີ້ມີແມ່ນ້ຳແຫ່ງຊີວິດໄຫລອອກຈາກບັນລັງຂອງພຣະເຈົ້າ ສ່ວນໃນແຄມແມ່ນ້ຳນັ້ນພຣະອົງໄດ້ຊົງສ້າງຕົ້ນໄມ້ແຫ່ງຊີວິດ ທີ່ຂາດຫາຍໄປໃນສມັຍຂອງອາດາມແລະເອວາພຸ້ນ.

## <u>ໃໝ່ທັງໝົດ</u> (ພຣະນິມິດ 21:1-8).

1. ອ່ານ ພຣະນິມິດ 21:1 ແລ້ວບອກນັກຮຽນວ່າ ທ້ອງຟ້າເກົ່າແລະແຜ່ນດິເກົ່າໄດ້ຜ່ານພົ້ນໄປ ແຕ່ໂຢຮັນບໍ່ໄດ້ບອກວ່າທ້ອງຟ້າໃໝ່ແລະແຜ່ນດິນໃໝ່ເປັນແນວໃດ ແຕ່ເຮົາຮູ້ວ່າຈະເປັນຮູບສີ່ຫລ່ຽມມົນທົນ.

2. ໂປໂລສອນໄວ້ວ່າ "*ເພາະວ່າສິ່ງເຫລົ່ານັ້ນຕົກຢູ່ໃຕ້ອຳນາດຂອງອະນິຈັງ ບໍ່ໃຊ້ຕາມຊອບໃຈຂອງມັນເອງ ແຕ່ເປັນໄປຕາມທີ່ພຣະເຈົ້າຊົງໃຫ້ມັກຕົກຢູ່ນັ້ນ ດ້ວຍມີຄວາມຫວັງໃຈວ່າ ສັພສິ່ງເຫລົ່ານັ້ນຈະພົ້ນຈາກອຳນາດຂອງຄວາມເສື່ອມສູນ* " (ໂຣມ 8: 20-21). ດ້ວຍເຫດນີ້ພຣະເຈົ້າຈຶ່ງຊົງສ້າງຂຶ້ນໃໝ່.

3. ແຜ່ນດິນໃໝ່ບໍ່ມີທະເລເພາະວ່າ ທ້ອງທະເລເປັນບ່ອນອາສັຍຂອງສັດຮ້າຍ (ອ່ານພຣະນິມິດ 13:1).

4. ພຣະເຈົ້າແລະມະນຸດຈະຢູ່ຮ່ວມກັນໂດຍສັນຕິສຸກ ແລະພຣະເຈົ້າຈະຊົງເຊັດນ້ຳຕາຂອງເຂົາ ແປວ່າບໍ່ມີຮ້ອງໄຫ້ໃນເຣື່ອງໃດ ໆອີກຕໍ່ໄປ (ຂໍ້ 3-4)

5. ພຣະອົງຊົງເປັນ ອາລະຟາ Alpha (ຕົວໜັງສືແຣກຂອງກຣີກ) ແລະ ໂອເມກາ (ຕົວໜັງສືສຸດທ້າຍຂອງກຣີກ)  ຊຶ່ງທັງໝົດແປວ່າພຣະອົງຊົງເປັນຕົ້ນແລະເປັນປາຍ.

## <u>ແມ່ນ້ຳ ແລະຕົ້ນໄມ້ແຫ່ງຊີວິດ</u> (ພຣະນິມິດ 22:1-7).

1. ເລົ່າເຣື່ອງແມ່ນ້ຳແຫ່ງຊີວິດ ໄຫລອອກມາຈາກຣາຊບັນລັງຂອງພຣະເຈົ້າ ແລ້ວເລົ່າເຖິງເຣື່ອງພຣະເຢຊູຂໍດື່ມນ້ຳຈາກຍິງສາວຊາວຊະມາເຣັຽ ແລ້ວສເນີເອົານ້ຳແຫ່ງຊີວິດໃຫ້ແກ່ນາງ (ໂຢຮັນ 4:14).

2. ຄວາມດີຂອງຕົ້ນໄມ້ແຫ່ງຊີວິດມີຄື:
   1. ເກີດຜົນສິບສອງຊະນິດ.
   2. ເກີດຜົນທຸກເດືອນ.
   3. ໃບຂອງຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ.

3. ນະຄອນທີ່ຖືກສ້າງໃໝ່ບໍ່ຕ້ອງການແສງພຣະອາທິດ ແລະບໍ່ຕ້ອງການໄຟໃນເວລາກາງຄືນ ເພາະພຣະເຈົ້າຊົງເປັນຄວາມສວ່າງ. (ຂໍ້ 5).

## <u>ເຊື້ອເຊີນໃຫ້ເຂົ້າມາ</u> (ພຣະນິມິດ 22:16–17).

1. ພຣະເຢຊູຊົງໃຊ້ເທວະດາອອກໄປມີໃຈຄວາມສຳຄັນຄື:

   1. ພຣະເຢຊູມີອຳນາດເໜືອເທວະດາ ແລະຊົງເປັນພຣະເຈົ້າຂອງເທວະດາ.
   2. ອອກໄປເປັນພະຍານຝ່າຍພຣະອົງຊົງເປັນເຊື້ອສາຍຂອງດາວິດ.
   3. ພຣະເຢຊູຊົງເປັນດາວເພັດ (Day star) ທີ່ສ່ອງແຈ້ງໃນຈິດໃຈຂອງຜູ້ເຊື່ອທຸກຄົນ.
   4. ເລົ່າເຖິງການສອນຂອງເປໂຕວ່າພຣະເຢຊູຊົງເປັນເໝືອນໂຄມທີ່ສ່ອງສວ່າງໃນບ່ອນມືດ ຈົນເຖິງວັນຮຸ່ງເຊົ້າແລະດາວເພັດຈະສ່ອງຂຶ້ນໃນໃຈຂອງພວກທ່ານ " (2 ເປໂຕ 1:19).

2. ຄຳເຊື້ອເຊີນຂອງພຣະເຢຊູແມ່ນເຊີນທຸກຊາດທຸກພາສາ *"ເຊີນມາ" ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, "ເຊີນມາ" ໃຫ້ຜູ້ຫິວນ້ຳເຂົ້າມາ ຜູ້ໃດມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສັຽຄ່າ* (ຂໍ້ 17).

*ຫວ*